PetroTrade
ບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
ຖະໜົນ: ກຳແພງເມືອງ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສ ປ ປ ລາວ ໂທ: 856 21 264834-5 ແຟັກ: 856021 264836
Kampheangmueng Rd, Phonthan Village, Xaysettha District, Vientiane Capital, Lao P.D.R, Tel: 856 21 264834-5, Fax: 856021 264836

ເລກທີ:...017...../ປທລ/2026
ນະຄອນຫຼວງວຽງຈັນ, ວັນທີ:

ໜັງສືແຈ້ງເຊີນ

ຮຽນ: ທ່ານ ຜູ້ຖືຮຸ້ນ ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ທີ່ນັບຖື.
ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2025.

- ອີງຕາມ ກົດລະບຽບ ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ສະບັບ ລົງວັນທີ 13 ຕຸລາ 2014;
- ອີງຕາມມະຕິກອງປະຊຸມສະພາບໍລິຫານ ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ຄັ້ງທີ 1/2026 ວັນທີ 25 ກຸມພາ 2026.

ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ("ບໍລິສັດ" ຫຼື "ປທລ") ຂໍຖືເປັນກຽດຮຽນເຊີນທ່ານ ຜູ້ຖືຮຸ້ນຂອງ ບໍລິສັດ ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2025 ທີ່ຈະໄດ້ຈັດຂຶ້ນໃນວັນທີ **23 ມິຖຸນາ 2026,** ເວລາ **09:00** ໂມງ (ເລີ່ມລົງທະບຽນເວລາ **08:00** ໂມງ), ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 8, ອາຄານຕະຫຼາດຫຼັກຊັບລາວ, ຖະໜົນ ກຳແພງເມືອງ ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ ເພື່ອພິຈາລະນາ ແລະ ຮັບຮອງເອົາບັນຫາຕ່າງໆ ຕາມວາລະກອງປະຊຸມທີ່ຄັດຕິດມາພ້ອມນີ້.

ບໍລິສັດໄດ້ແຈ້ງວັນ, ເວລາ ແລະ ວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2025 ຜ່ານເວັບໄຊຂອງຕະຫຼາດຫຼັກຊັບ ລາວ (www.lsx.com.la)

ຫວັງຢ່າງຍິ່ງວ່າ ທ່ານຄົງຈະສະລະເວລາອັນມີຄ່າຂອງທ່ານເຂົ້າຮ່ວມປະຊຸມກັບພວກເຮົາໃນຄັ້ງນີ້ດ້ວຍ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ
ປະທານສະພາບໍລິຫານ ອິດສະລະ

ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ Petroleum Trading Lao Public Company

ສົລາ ວົງແກ້ວ

ເອກະສານຄັດຕິດ

1. ວາລະກອງປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີ 2025 (ເອກະສານຄັດຕິດ 1);
2. ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024 (ເອກະສານຄັດຕິດ 2);
3. (ຮ່າງ) ເອກະສານລາຍງານການເງິນ ປະຈຳປີ 2025 (ເອກະສານຄັດຕິດ 3);
4. ຊີວະປະຫວັດຫຍໍ້ຂອງ ສະມາຊິກສະພາບໍລິຫານ ອິດສະລະ ຊຸດປະຈຸບັນ (ເອກະສານຄັດຕິດ 4);
5. ໃບມອບສັນທະ (ເອກະສານຄັດຕິດ 5);
6. ຄຳແນະນຳກ່ຽວກັບເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີເພື່ອເຂົ້າຮ່ວມປະຊຸມ (ເອກະສານຄັດຕິດ 6);
7. ແຜນທີ່ສະຖານທີ່ຈັດປະຊຸມ (ເອກະສານຄັດຕິດ 7);

ໝາຍເຫດ

1. ຜູ້ຖືຮຸ້ນທຸກທ່ານ ຕ້ອງໄປຮັບເອົາໜັງສືເຊີນປະຊຸມພ້ອມເອກະສານຄັດຕິດຕ່າງໆ ເລີ່ມຕັ້ງແຕ່ 05 ມິຖຸນາ 2026, ຢູ່ ອາຄານຕະຫຼາດຫຼັກຊັບລາວ ຊັ້ນ 4 ພະແນກ ຊຳລະສະສາງ ແລະ ຮັບຝາກຫຼັກຊັບ, ບ້ານ ໂພນທັນ, ຖະໜົນ ກຳແພງ ເມືອງ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ໂທລະສັບ: (856-21) 454361-4;
2. ສຳລັບຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມດ້ວຍຕົນເອງກະລຸນານຳບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນຄົນ ຕ່າງປະເທດ) ມາໃນວັນປະຊຸມ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມ;
3. ສຳລັບຜູ້ຖືຮຸ້ນທີ່ຈະໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງ ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນ ໃນໃບມອບສັນທະ ຕາມ (ເອກະສານຄັດຕິດ 5) ທີ່ຄັດຕິດມາພ້ອມນີ້ໃຫ້ຖືກຕ້ອງຄົບຖ້ວນ;
4. ສຳລັບຜູ້ຕາງໜ້າທີ່ຈະເຂົ້າຮ່ວມປະຊຸມຈະຕ້ອງນຳເອກະສານ ຫຼື ຫຼັກຖານ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມຕາມລາຍ ລະອຽດທີ່ໄດ້ລະບຸໄວ້ໃນ (ເອກະສານຄັດຕິດ 6) ທີ່ໄດ້ຄັດຕິດມາພ້ອມ ແລະ ສົ່ງມອບໃຫ້ປະທານກອງປະຊຸມ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍຈາກປະທານ, ຜູ້ຕາງໜ້າຈຶ່ງເຂົ້າຮ່ວມກອງປະຊຸມໄດ້;
5. ໃນກໍລະນີທີ່ຜູ້ຖືຮຸ້ນຈະມອບໝາຍໃຫ້ສະມາຊິກສະພາບໍລິຫານ ອິດສະລະ ຂອງບໍລິສັດ ເຂົ້າຮ່ວມກອງປະຊຸມ ແລະ ລົງ ຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສັນທະ ແລະ ໝາຍ (✓) ໃນ □ ເພື່ອເລືອກ ເອົາສະມາຊິກສະພາບໍລິຫານ ອິດສະລະ ຂອງບໍລິສັດ ທ່ານໃດທ່ານໜຶ່ງເປັນຜູ້ຕາງໜ້າ ແລະ ສົ່ງໃບມອບສັນທະດັ່ງກ່າວ ພ້ອມເອກະສານປະກອບ ສົ່ງເຖິງ ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ, ເລຂານຸການຂອງບໍລິສັດ **ທ່ານ ຄຳ ພຸດ ສິມບຸນ** ສຳນັກງານຕັ້ງຢູ່ ຖະໜົນ ກຳແພງເມືອງ, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ ແລະ ກະລຸນາສົ່ງເຖິງບໍລິສັດກ່ອນ 3 ວັນ ກ່ອນມື້ປະຊຸມ;
6. ຖ້າຫາກທ່ານໃດມີຂໍ້ສົງໄສ ແລະ ຄຳຖາມກ່ຽວກັບໃບມອບສັນທະ ລວມທັງລາຍລະອຽດໃນໜັງສືເຊີນປະຊຸມສະບັບນີ້ ທ່ານສາມາດສອບຖາມ **ທ່ານ ຄຳພຸດ ສິມບຸນ** ເບີໂທ 020 5555 9043.

<u>ວາລະທີ 01: ພິຈາລະນາ ແລະ ຮັບຮອງເອົາ ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024</u>

<u>ລາຍລະອຽດ</u>: ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024 ໄດ້ຈັດຂຶ້ນໃນວັນທີ 30 ເມສາ 2025 ໂດຍກອງປະຊຸມໄດ້ພິຈາລະນາກິດຈະກຳຕ່າງໆ ເຊິ່ງກອງປະຊຸມດັ່ງກ່າວໄດ້ເຮັດບົດບັນທຶກຕາມເນື້ອໃນຂອງກອງປະຊຸມຢ່າງຖືກຕ້ອງ ໂດຍມີລາຍລະອຽດຂອງບົດບັນທຶກກອງປະຊຸມຕາມ **(ເອກະສານຄັດຕິດ 2).**

<u>ຄຳເຫັນຂອງສະພາບໍລິຫານ:</u> ສະພາບໍລິຫານ ໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາຮັບຮອງເອົາວາລະນີ້.

<u>ຄະແນນສຽງທີ່ຕ້ອງໃຊ້:</u> ອີງຕາມກົດໝາຍວ່າດ້ວຍ ວິສາຫະກິດ ທີ່ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິກອງປະຊຸມດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

<u>ວາລະທີ 02: ພິຈາລະນາ ແລະ ຮັບຮອງເອົາ ບົດລາຍງານຜົນການດຳເນີນທຸລະກິດ ປະຈຳປີ 2025 ແລະ ເອກະສານລາຍງານການເງິນທີ່ຜ່ານການກວດສອບຂອງຜູ້ກວດສອບພາຍນອກ ປະຈຳປີ 2025</u>

<u>ລາຍລະອຽດ:</u>

I. ຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2025 ມີດັ່ງນີ້:

ໃນປີ 2025, ບໍລິສັດໄດ້ປະເຊີນກັບໄລຍະເວລາທາງການເງິນທີ່ທ້າທາຍ ໂດຍຍອດຂາຍລວມທັງໝົດຫຼຸດລົງ ເຊິ່ງບໍ່ບັນລຸໄດ້ຕາມແຜນການຂະຫຍາຍຕົວທີ່ຕັ້ງໄວ້ ແລະ ຫຼຸດລົງເມື່ອທຽບໃສ່ກັບຜົນການດຳເນີນງານໃນປີຜ່ານມາ. ຍອດຂາຍຕົວຈິງສະສົມບັນລຸໄດ້ 227,137,867 ລິດ ເມື່ອທຽບໃສ່ກັບຕົວເລກຄາດໝາຍທີ່ຕັ້ງໄວ້ 320,491,000 ລິດ, ເຊິ່ງເຮັດໃຫ້ປະລິມານຍອດຂາຍຫຼຸດລົງ 29.13% ຈາກແຜນການ. ເມື່ອທຽບກັບຍອດຂາຍໃນປີ 2024 ທີ່ບັນລຸໄດ້ 264,789,458 ລິດ ແລ້ວ ເຫັນວ່າທຸລະກິດໄດ້ປະເຊີນກັບການຫົດຕົວຂອງປະລິມານຍອດຂາຍແບບປີຕໍ່ປີ ຢູ່ທີ່ 14.22%, ເຊິ່ງມີສາເຫດຫຼັກມາຈາກການຫຼຸດລົງຂອງການຊື້-ຂາຍໃນຕະຫຼາດທົ່ວໄປ (Open-market transactions).

ປັດໄຈຕົ້ນຕໍທີ່ເຮັດໃຫ້ເກີດການຫຼຸດລົງນີ້ແມ່ນ ກຸ່ມລູກຄ້າ SPOT (ກຸ່ມລູກຄ້າຊື້-ຂາຍເປັນຄັ້ງຄາວ), ເຊິ່ງຫົດຕົວລົງ 31.63% ແບບປີຕໍ່ປີ ແລະ ຕ່ຳກວ່າແຜນການທີ່ວາງໄວ້ໃນປີ 2025 ເຖິງ 36.70%. ໃນສ່ວນຂອງ ສະຖານີບໍລິການນ້ຳມັນຂາຍຍ່ອຍ ກໍປະເຊີນກັບຄວາມທ້າທາຍເຊັ່ນກັນ ໂດຍຫຼຸດລົງ 25.05% ຈາກແຜນການປີ 2025, ເຖິງແມ່ນວ່າປະລິມານຍອດຂາຍໂດຍລວມຈະຂ້ອນຂ້າງຄົງທີ່ ໂດຍຫຼຸດລົງພຽງເລັກນ້ອຍຢູ່ທີ່ 1.56% ແບບປີຕໍ່ປີ. ພາຍໃນເຄືອຂ່າຍການຂາຍຍ່ອຍ, ຜົນການດຳເນີນງານແມ່ນມີຄວາມແຕກຕ່າງກັນຢ່າງຫຼວງຫຼາຍ; ໂດຍກຸ່ມສະຖານີລະດັບພຣີມ່ຽມ ເຊັ່ນ ລະດັບ Platinum ແລະ Gold ສະແດງໃຫ້ເຫັນການເຕີບໂຕທີ່ດີແບບປີຕໍ່ປີ ຢູ່ທີ່ 12.21% ແລະ 5.51% ຕາມລຳດັບ, ໃນຂະນະທີ່ລະດັບ Standard (ມາດຕະຖານ) ແລະ ລະດັບ Thongthin (ທ້ອງຖິ່ນ) ໄດ້ດຶງພາບລວມຂອງກຸ່ມນີ້ລົງ ດ້ວຍການຫົດຕົວເປັນຕົວເລກສອງຫຼັກຢ່າງເຫັນໄດ້ຊັດເຈນ.

ໃນທາງກົງກັນຂ້າມ, ແຜນຂອງລູກຄ້າໂຄງການ (B2B) ໄດ້ກາຍເປັນກົນໄກການເຕີບໂຕພຽງໜຶ່ງດຽວຂອງບໍລິສັດ. ເຖິງແມ່ນວ່າຈະຫຼຸດລົງ 22.53% ຈາກເປົ້າໝາຍພາຍໃນປີ 2025 ທີ່ຕັ້ງໄວ້ສູງກໍຕາມ, ແຕ່ກຸ່ມນີ້ບັນລຸການ

ຂະຫຍາຍຕົວແບບປີຕໍ່ປີ ຢ່າງໂດດເດັ່ນເຖິງ 16.73%, ເຊິ່ງເພີ່ມປະລິມານຍອດຂາຍຂຶ້ນເກືອບ 10 ລ້ານລິດ ເມື່ອທຽບໃສ່ປີ 2024. ທ່າອ່ຽງການເຕີບໂຕນີ້ສະແດງໃຫ້ເຫັນວ່າໃນຂະນະທີ່ຊ່ອງທາງການຕະຫຼາດທົ່ວໄປທີ່ມີຄວາມຜັນຜວນກຳລັງປະເຊີນກັບຄວາມຫຍຸ້ງຍາກ, ການປ່ຽນແປງຍຸດທະສາດຂອງບໍລິສັດ ທີ່ຫັນໄປຫາການສ້າງຄູ່ຄ້າອົງກອນ ແລະ ຄູ່ຄ້າຕາມສັນຍາໄລຍະຍາວ (B2B) ແມ່ນກຳລັງປະສົບຜົນສຳເລັດ ແລະ ໃຫ້ຜົນຮັບທີ່ເປັນບວກ.

❖ **ຕາຕະລາງຍອດຂາຍລູກຄ້າໂຄງການ:**

1) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ແຜນປີ 2025 ກັບ ຍອດຂາຍຕົວຈິງ

(ຫົວໜ່ວຍ:ລິດ)

ລູກຄ້າ	ແຜນ 2025	ຍອດຂາຍ 2025	ສ່ວນຕ່າງ ຍອດຂາຍ 2025	
	ລິດ	ລິດ	ລິດ	ເປັນ %
B2B	89,806,000	69,576,700	**-20,229,300**	-22.526%

2) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ຍອດຂາຍປີ 2024 ກັບ ຍອດຂາຍປີ 2025

(ຫົວໜ່ວຍ:ລິດ)

ລູກຄ້າ	ຍອດຂາຍ 2024	ຍອດຂາຍ 2025	ສ່ວນຕ່າງ ຍອດຂາຍ 2024-2025	
	ລິດ	ລິດ	ລິດ	ເປັນ %
B2B	59,605,000	69,576,700	9,971,700	16.730%

❖ **ຕາຕະລາງຍອດຂາຍລູກຄ້າ Spot**

1) ຕາຕະລາງປຽບທຽບຍອດຂາຍ ລະຫວ່າງ ແຜນປີ 2025 ກັບ ຍອດຂາຍຕົວຈິງ

(ຫົວໜ່ວຍ:ລິດ)

ລູກຄ້າ	ແຜນ 2025	ຍອດຂາຍ 2025	ສ່ວນຕ່າງ ຍອດຂາຍ 2025	
	ລິດ	ລິດ	ລິດ	ເປັນ %
SPOT	131,674,000	83,349,167	-48,324,833	-36.700%

2) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ຍອດຂາຍປີ 2024 ກັບ ຍອດຂາຍປີ 2025

(ຫົວໜ່ວຍ:ລິດ)

ລູກຄ້າ	ແຜນ 2025	ຍອດຂາຍ 2025	ສ່ວນຕ່າງ ຍອດຂາຍ 2025	
	ລິດ	ລິດ	ລິດ	ເປັນ %
SPOT	121,912,458	83,349,167	-38,563,291	-31.632%

❖ **ຕາຕະລາງຍອດຂາຍລູກຄ້າປ້ຳນ້ຳມັນ:**

1) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ແຜນປີ 2025 ກັບ ຍອດຂາຍຕົວຈິງ

ລ/ດ	ລູກຄ້າ	ແຜນ	ຍອດຂາຍ	ສ່ວນຕ່າງ ແຜນ-ຍອດຂາຍ	
		ລິດ	ລິດ	ລິດ	ເປັນ %
1	ປ້ຳນ້ຳມັນພລາຕິນຳ/ Platinum	22,475,177	12,738,000	-9,737,177	-43.324%
2	ປ້ຳນ້ຳມັນໂກລ/Gold	30,343,369	29,314,000	-1,029,369	-3.392%
3	ປ້ຳນ້ຳມັນມາດຕະຖານ/ Standard	35,117,252	23,128,000	-11,989,252	-34.141%
4	ປ້ຳນ້ຳມັນ ທ້ອງຖິ່ນ/ Thongthin	11,075,202	9,032,000.00	-2,043,202	-18.448%
ລວມ		**99,011,000.00**	**74,212,000.00**	**(24,799,000.00)**	**-25.047%**

2) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ຍອດຂາຍປີ 2024 ກັບ ຍອດຂາຍປີ 2025

ລ/ດ	ລູກຄ້າ	ຍອດຂາຍ 2024	ຍອດຂາຍ 2025	ສ່ວນຕ່າງ ຍອດຂາຍ 2024-2025	
		ລິດ	ລິດ	ລິດ	ເປັນ %
1	ປ້ຳນ້ຳມັນພລາຕິນຳ/ Platinum	11,325,000	12,738,000	1,386,000	12.209%
2	ປ້ຳນ້ຳມັນ ໂກລ/Gold	27,782,000	29,314,000	1,532,000	5.514%
3	ປ້ຳນ້ຳມັນມາດຕະຖານ/ Standard	25,813,000	23,128,000	-2,685,000	-10.402%
4	ປ້ຳນ້ຳມັນທ້ອງຖິ່ນ/ Thongthin	10,442,000	9,032,000	-1,410,000	-13.503%
ລວມ		**75,389,000**	**74,212,000**	**(1,177,000)**	**-1.561%**

❖ **ຕາຕະລາງຍອດຂາຍລູກຄ້າທັງໝົດ**

1) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ແຜນປີ 2025 ກັບ ຍອດຂາຍປີ 2025

ລ/ດ	ລູກຄ້າ	ແຜນ 2025	ຍອດຂາຍ 2025	ສ່ວນຕ່າງ ແຜນ-ຍອດຂາຍ 2025	
		ເປັນ ລິດ	ເປັນ ລິດ	ເປັນ ລິດ	ເປັນ %
1	ລູກຄ້າໂຄງການ/B2B	89,806,000	69,576,700	-20,229,300	-22.526%
2	ລູກຄ້າປັ໊ມນ້ຳມັນ/Gas Station	99,011,000	74,212,000	-24,799,000	-25.047%
3	SPOT	131,674,000	83,349,167	-48,324,833	-36.700%
ລວມ		320,491,000	227,137,867	(93,353,133)	-29.128%

2) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ຍອດຂາຍ 2024 ກັບ ຍອດຂາຍ 2025

ລ/ດ	ລູກຄ້າ	ຍອດຂາຍ 2024	ຍອດຂາຍ 2025	ສ່ວນຕ່າງ ຍອດຂາຍ 2024-2025	
		ເປັນ ລິດ	ເປັນ ລິດ	ເປັນ ລິດ	ເປັນ %
1	ລູກຄ້າໂຄງການ/B2B	59,605,000	69,576,700	9,971,700	16.730%
2	ລູກຄ້າປັ໊ມນ້ຳມັນ/Gas Station	83,272,000	74,212,000	-9,060,000	-10.880%
3	SPOT	121,912,458	83,349,167	-38,563,291	-31.632%
ລວມ/Total		264,789,458	227,137,867.00	(37,651,591.00)	-14.219%

❖ **ການມອບພັນທະອາກອນ ປະຈຳປີ 2025**

ຫົວໜ່ວຍ:(ກີບ)

ປະເພດອາກອນ	ປີ 2023	ປີ 2024	ປີ 2025
ພາສີນຳເຂົ້າ	212,376,419,048	264,259,338,820	198,577,938,891
ອາກອນຊົມໃຊ້	118,770,619,941	144,377,102,610	108,408,625,699
ອາກອນມູນຄ່າເພີ່ມ	231,616,178,284	374,378,918,119	327,856,673,867
ຄັງແຮ/ກອງທຶນນ້ຳມັນ	154,263,520,000	182,209,442,966	203,301,293,210
ອິມິດເຕ້	-	-	-
ຄຸນນະພາບ	7,574,210,000	8,954,337,326	7,786,455,693
ຄັງແຮ/ກອງທຶນນ້ຳມັນ	154,263,520,000	182,209,442,966	203,301,293,210
ໃບແຈ້ງພາສີ	289,796,050	506,315,000	475,395,160
ຄ່າຢອດສານ ມາກເກ້	336,330,000	21,914,208,838	20,022,314,638
ຄ່າດັດສົມ	-	-	5,795,890,000
ອມພ ຈ່າຍເພີ້ມ ປະຈຳເດືອນ	43,893,953,108	56,189,418,328	49,132,755,000
ອາກອນກຳໄລ	7,900,000,000	1,400,000,000	-
ອາກອນເງິນເດືອນ	2,085,594,446	3,764,400,977	-
ລວມ:	**891,637,740,877**	**1,190,989,352,063**	**1,032,028,257,318**

❖ **ລາຍການຊ່ວຍເຫຼືອສັງຄົມຕ່າງໆ ປະຈຳປີ 2025**

ຫົວໜ່ວຍ:(ກີບ)

ລດ	ລາຍການ	ຈຳນວນ
1	ຄ່າບິວລະບັດຮັກສາວົງວຽນດອນໜູນ ປີ 2025	82,184,640.00
2	ຊຸກຍູ້ນ້ຳມັນລົດໃຫ້ໜ່ວຍງານກູ້ໄພ ແລະ ອົງການກາແດງ ປີ 2025	78,136,666.00
3	ສະໜັບສະໜູນກອງປະຊຸມຄັ້ງທີ 47 ປະຈຳປີ 2025 ຂອງຄະນະກຳມະການຮ່ວມມືພາຄີ ລະຫວ່າງສອງລັດທະບານ ລາວ-ຫວຽດ	100,000,000.00

4	ສະໜັບສະໜູນການສ້າງກິດຈະກຳຊາວໜຸ່ມຕ້ອນຮັບວັນສຳຄັນຂອງ ສປປ ລາວ ປີ 2025 ໃຫ້ ສຄອຊ	50,000,000.00
5	ສະໜັບສະໜູນການຈັດງານ"ສິ່ງເສີມຜູ້ປະກອບການຍຸກໃໝ່ ຄັ້ງທີ IV" ຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ	10,000,000.00
6	ມອບຜ້າຫົ່ມ ຈຳນວນ 100ຜືນ ໃຫ້ສະພາແຫ່ງຊາດ	8,350,100.00
7	ສະໜັບສະໜູນການແຜ່ປັດໃຈຮັບໃຊ້ກອງປະຊຸມຄັ້ງທີ II ຄະນະພັກຮາກຖານກຸ່ມບໍລິສັດ ພົງສະຫວັນ	27,000,000.00
8	ສະໜັບສະໜູນຊຸກຍູ້ເນື່ອງໃນໂອກາດວັນເດັກນ້ອຍສາກົນ 1 ມິຖຸນາ ແລະ ວັນປູກຕົ້ນໄມ້ແຫ່ງຊາດ ໃຫ້ໂທລະພາບແຫ່ງຊາດລາວ	5,000,000.00
9	ອຸປະຖຳມູນລະນິທິພົງສະຫວັນ	50,000,000.00
10	ມອບຜ້າຫົ່ມໃຫ້ມູນນິທິພົງສະຫວັນ ຊ່ວຍເຫຼືອປະຊາຊົນທີ່ຖືກອຸທົກກະໄພ ໃນດ້ານຕ່າງໆ	41,750,500.00
11	ອຸປະຖຳຖ່າຍທອດສົດໃນບຸນຊ່ວງເຮືອເດືອນ9 ຫໍ່ເຂົ້າປະດັບດິນທີຫລວງພະບາງ ປະຈຳປີ 2025	10,000,000.00
12	ສະຫນັບສະຫນູນງານຜະລິດຕະພັນລາວ 2025	150,000,000.00
13	ສະໜັບສະໜູນ ສະໂມສອນ ເພື່ອນສະຫາຍຮ່ວມສ້າງໂຮງຮຽນພັກຊັ້ນສູງ ໂມດສະກູ	30,000,000.00
14	ສະຫນັບສະຫນູນຂະບວນການກິລາເພື່ອສະຫລຸບຜົນງານ 15 ປີ ຕະຫລາດທຶນລາວ	3,000,000.00
15	ກິດຈະກຳຊ່ວຍເຫລືອສັງຄົມມອບສູນເສຍອົງຄະພິເສດ 790	103,420,168.00
	ລວມ	**748,842,074.00**

II. ເອກະສານລາຍງານການເງິນ ປະຈຳປີ 2025 ສາມາດສະຫຼຸບຕົວເລກໄດ້ດັ່ງນີ້:

ຫົວໜ່ວຍ: ກີບ

ລາຍການ	2025	2024
ຊັບສິນທັງໝົດ	4,279,398,166,037	3,568,199,871,890
ໜີ້ສິນທັງໝົດ	3,285,045,452,877	2,660,287,937,651
ສ່ວນຂອງຜູ້ຖືຮຸ້ນ	994,352,713,160	907,911,934,239
ລາຍຮັບທັງໝົດ	4,005,046,671,942	5,108,874,312,772
ກຳໄລສຸດທິ	29,896,169,669	177,592,401,189
ກຳໄລສຸດທິຕໍ່ຮຸ້ນ	127	749

ລາຍລະອຽດ (ຮ່າງ) ເອກະສານລາຍງານການເງິນ ປະຈຳປີ 2025 **(ເອກະສານຄັດຕິດ 3)**

<u>ຄຳເຫັນຂອງສະພາບໍລິຫານ</u>: ສະພາບໍລິຫານ ໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາຮັບຮອງເອົາວາລະນີ້.

<u>ຄະແນນສຽງທີ່ຕ້ອງໃຊ້:</u> ອີງຕາມກົດໝາຍວ່າດ້ວຍ ວິສາຫະກິດ ທີ່ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິກອງປະຊຸມດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

<u>ວາລະທີ 03: ພິຈາລະນາ ແລະ ຮັບຮອງບໍ່ໃຫ້ມີການປັນຜົນ ຈາກຜົນການດຳເນີນທຸລະກິດປະຈຳປີ 2025 ອັນເນື່ອງມາຈາກບໍລິສັດ ຂາດທຶນສະສົມໃນຊຸມປີຜ່ານມາ</u>

<u>ລາຍລະອຽດ</u>: ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 33/ສພຊ ລົງວັນທີ 29 ທັນວາ 2022, ມາດຕາ 153 “ການແບ່ງເງິນປັນຜົນ” ຫ້າມບໍ່ໃຫ້ບໍລິສັດຈ່າຍເງິນປັນຜົນ ເມື່ອບໍລິສັດຍັງມີການຂາດທຶນສະສົມຢ່າງຕໍ່ເນື່ອງໃນຊຸມປີຜ່ານມາ.

ດັ່ງນັ້ນ, ສະພາບໍລິຫານ ຈຶ່ງເຫັນດີຮັບຮອງການບໍ່ປັນຜົນ ຈາກຜົນການດຳເນີນທຸລະກິດປະຈຳປີ 2025 ອັນເນື່ອງມາຈາກບໍລິສັດຍັງມີການຂາດທຶນສະສົມຢ່າງຕໍ່ເນື່ອງໃນຊຸມປີຜ່ານມາ ແລະ ສະເໜີນຳກຳໄລສຸດທິປະຈຳປີ ເພື່ອຫັກເຂົ້າຂາດທຶນສະສົມລ້ຳແບ່ງປັນ.

<u>ຄຳເຫັນຂອງສະພາບໍລິຫານ</u>: ສະພາບໍລິຫານ ໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາຮັບຮອງເອົາວາລະນີ້.

<u>ຄະແນນສຽງທີ່ຕ້ອງໃຊ້:</u> ອີງຕາມກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

<u>ວາລະທີ 04: ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2026</u>

<u>ລາຍລະອຽດ</u>: ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2026 ມີດັ່ງນີ້:

ໃນປີ 2026, ບໍລິສັດຕັ້ງເປົ້າໝາຍຍອດຂາຍລວມໃຫ້ບັນລຸ 286 ລ້ານລິດ ຊຶ່ງສະທ້ອນໃຫ້ເຫັນເຖິງການໃຫ້ຄວາມສຳຄັນທາງດ້ານຍຸດທະສາດໃນການສ້າງສະຖຽນລະພາບໃຫ້ແກ່ການດຳເນີນງານ, ການຍົກລະດັບຄວາມສາມາດໃນການແຂ່ງຂັນທາງການຕະຫຼາດ ແລະ ການບໍລິຫານຈັດການກຸ່ມລູກຄ້າໃຫ້ມີປະສິດທິພາບສູງສຸດໃນທຸກໆພາກພື້ນ. ແນວທາງການດຳເນີນງານຂອງບໍລິສັດແມ່ນສ້າງຂຶ້ນບົນພື້ນຖານຂອງຄວາມຢືດຢຸ່ນ ແລະ ການເຕີບໂຕແບບຍືນຍົງ, ໂດຍເນັ້ນໃສ່ການຮ່ວມມືທີ່ມີຄຸນຄ່າສູງ ແລະ ການເພີ່ມປະສິດທິພາບໃນການດຳເນີນງານ ເພື່ອຮັບມືກັບຄວາມຜັນຜວນຂອງຕະຫຼາດ.

- **ເສົາຄ້ຳຍຸດທະສາດຫຼັກ (Core Strategic Pillars).**

i. ການບໍລິຫານຈັດການຕ່ອງໂສ້ອຸປະທານໃຫ້ມີປະສິດທິພາບສູງສຸດ (Supply Chain Optimization): ບໍລິສັດຈະມີມາດຕະການໃນການແກ້ໄຂຂໍ້ຈຳກັດດ້ານການສະໜອງສິນຄ້າຂ້າມແດນຢ່າງຕັ້ງໜ້າ ໂດຍການເພີ່ມຄວາມຫຼາກຫຼາຍຂອງແຫຼ່ງສະໜອງທຶນ ແລະ ປັບປຸງປະສິດທິພາບດ້ານໂລຈິສຕິກ. ສິ່ງນີ້ຈະຊ່ວຍຮັບປະກັນໂຄງສ້າງລາຄາທີ່ສາມາດແຂ່ງຂັນໄດ້ ແລະ ສອດຄ່ອງກັບວົງຈອນຮວມເຖິງໂອກາດທາງການຕະຫຼາດ, ພ້ອມທັງເສີມສ້າງຄວາມສາມາດຂອງບໍລິສັດໃນການແຂ່ງຂັນທັງໃນຂະແໜງຂາຍສົ່ງ ແລະ ຂາຍຍ່ອຍ.

ii. ການເຕີບໂຕໂດຍເນັ້ນລູກຄ້າເປັນສູນກາງ (Customer-Centric Growth): ບໍລິສັດມີຄວາມມຸ່ງໝັ້ນທີ່ຈະສ້າງຄວາມເຂົ້າໃຈຢ່າງເລິກເຊິ່ງຕໍ່ຄວາມຕ້ອງການຂອງລູກຄ້າ ຜ່ານການວິໄຈຕະຫຼາດເປົ້າໝາຍ. ໂດຍການປ່ຽນຜ່ານຈາກແນວທາງທີ່ເນັ້ນປະລິມານໄປສູ່ແນວທາງທີ່ເນັ້ນຄຸນຄ່າ, ຊຶ່ງມຸ່ງເນັ້ນໃສ່ການຮັກສາຄວາມສຳພັນອັນດີກັບລູກຄ້າເກົ່າ ຄວບຄູ່ໄປກັບການຊອກຫາໂຄງການໃໝ່ໆທີ່ມີທ່າແຮງສູງ, ບໍລິສັດຕັ້ງເປົ້າໝາຍທີ່ຈະເພີ່ມຜົນກຳໄລ ແລະ ຄວາມຈົງຮັກພັກດີຂອງລູກຄ້າໃຫ້ຫຼາຍຂຶ້ນ.

iii. ການຂະຫຍາຍໂຄງລ່າງພື້ນຖານ ແລະ ເຕັກໂນໂລຊີ (Expansion of Infrastructure & Technology): ບໍລິສັດຈະສືບຕໍ່ລົງທຶນໃນເຄືອຂ່າຍສະຖານີບໍລິການ ແລະ ສະແຫວງຫາຂໍ້ລິເລີ່ມດ້ານພະລັງງານໃໝ່ໆ ເຊັ່ນ: ການນຳເອົາໂຄງລ່າງພື້ນຖານການຊາດລິດໄຟຟ້າ (EV charging) ເຂົ້າມາບໍລິການໃນສະຖານີຫຼັກ. ນອກຈາກນີ້, ບໍລິສັດກຳລັງປະສົມປະສານເຕັກໂນໂລຊີທີ່ທັນສະໄໝເພື່ອຍົກລະດັບຂີດຄວາມສາມາດດ້ານການບໍລິຫານຄວາມສຳພັນລູກຄ້າ (CRM) ເພື່ອຮັບປະກັນໃຫ້ລູກຄ້າສາມາດເຂົ້າເຖິງການບໍລິການໄດ້ຢ່າງຕໍ່ເນື່ອງ ແລະ ໄດ້ຮັບການບໍລິການທີ່ວ່ອງໄວຂຶ້ນ.

iv. ຄວາມເປັນເລີດດ້ານການດຳເນີນງານ ແລະ ການບໍລິຫານຈັດການທາງດ້ານການເງິນ (Operational Excellence & Financial Management): ການເພີ່ມທະວີການຄວບຄຸມຕົ້ນທຶນການດຳເນີນງານ, ການປັບປຸງການບໍລິຫານຈັດການໜີ້ສິນ ແລະ ການຕິດຕາມກວດກາຊັບສິນຢ່າງເຂັ້ມງວດ ແມ່ນຫົວໃຈສຳຄັນຂອງແຜນການປີ 2026 ຂອງບໍລິສັດ. ໂດຍການຍົກລະດັບຄວາມເປັນມືອາຊີບຂອງທີມງານໃນແຕ່ລະພາກພື້ນ ແລະ ປັບປຸງຂັ້ນຕອນການເຮັດວຽກພາຍໃນໃຫ້ມີຄວາມລະອຽດອ່ອນ, ບໍລິສັດມີຄວາມພ້ອມທີ່ຈະມອບການບໍລິການທີ່ມີຄວາມສະໝ່ຳສະເໝີ ແລະ ເຊື່ອຖືໄດ້ໃຫ້ແກ່ຄູ່ຮ່ວມທຸລະກິດຂອງບໍລິສັດ.

ຍຸດທະສາດຂອງບໍລິສັດສຳລັບປີ 2026 ໄດ້ຖືກອອກແບບມາເພື່ອສ້າງຄວາມຢືດຢຸ່ນ ແລະ ຄວາມສາມາດໃນການຟື້ນຕົວຕໍ່ໜ້າສະພາວະຕະຫຼາດທີ່ມີຄວາມທ້າທາຍ. ໂດຍການຮັດແໜ້ນຄວາມສຳພັນໃຫ້ແໜ້ນແຟ້ນຍິ່ງຂຶ້ນກັບພາກລັດ, ການປັບປຸງລະບົບໂລຈິສຕິກໃຫ້ມີປະສິດທິພາບສູງສຸດ, ແລະ ການຮັກສາແນວທາງການລົງທຶນຢ່າງມີລະບຽບວິໄນ, ຝ່າຍການຄ້າ (Commercial Division) ຍັງຄົງອຸທິດrowເພື່ອມອບວິທີການແກ້ໄຂດ້ານພະລັງງານແບບຍືນຍົງ ຊຶ່ງຈະຊ່ວຍສ້າງມູນຄ່າໃຫ້ແກ່ຜູ້ມີສ່ວນຮ່ວມ ແລະ ສະໜັບສະໜູນການພັດທະນາຂອງປະເທດຊາດ.

<u>ຄຳເຫັນຂອງສະພາບໍລິຫານ:</u> ສະພາບໍລິຫານ ໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາຮັບຮອງເອົາວາລະນີ້.

<u>ຄະແນນສຽງທີ່ຕ້ອງໃຊ້:</u> ອີງຕາມກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

<u>ວາລະທີ 05: ພິຈາລະນາ ແລະ ຮັບຮອງ ແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກຄື ບໍລິສັດ PriceWaterhouseCooper (Lao) Sole Co., Ltd ("PwC") ພ້ອມທັງກຳນົດຄ່າຈ້າງ ປະຈຳປີ 2026 ບໍ່ເກີນ 37,000 ໂດລາສະຫະລັດ</u>

<u>ລາຍລະອຽດ</u>: ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 33/ສພຊ ລົງວັນທີ 29 ທັນວາ 2022 ມາດຕາ 152 ສິດ ແລະ ໜ້າທີ່ຂອງກອງປະຊຸມສາມັນຜູ້ຖືຮຸ້ນ ກຳນົດໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນເປັນຜູ້ເລືອກຕັ້ງຜູ້ກວດສອບບັນຊີ ແລະ ຄ່າຈ້າງຂອງຜູ້ກວດສອບບັນຊີ ໂດຍສະພາບໍລິຫານໄດ້ພິຈາລະນາເຫັນຄວນໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາແຕ່ງຕັ້ງ

PWC ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ປະຈຳປີ 2026 ໂດຍກຳນົດຄ່າຈ້າງບໍ່ເກີນ 37,000 ໂດລາສະຫະລັດ; PWC ເປັນບໍລິສັດກວດສອບບັນຊີພາຍນອກທີ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ. ປທລ ໄດ້ໃຊ້ບໍລິການ PWC ເປັນຜູ້ກວດສອບບັນຊີພາຍນອກແຕ່ປີ 2018 ຫາ 2025 ເຫັນວ່າ PWC ມີປະສົບການ, ມີຄວາມ ລະອຽດຮອບຄອບໃນການທົບທວນ. ຊຶ່ງລາຍລະອຽດຄ່າຈ້າງແຕ່ລະປີມີດັ່ງລຸ່ມນີ້:

ປີ	ມູນຄ່າການກວດສອບ (ໂດລາສະຫະລັດ)
2022	32,000
2023	32,000
2024	32,000
2025	37,000
2026	ບໍ່ເກີນ 37,000

<u>ຄຳເຫັນຂອງສະພາບໍລິຫານ</u>: ສະພາບໍລິຫານ ໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາ ຮັບຮອງເອົາວາລະນີ້.

<u>ຄະແນນສຽງທີ່ຕ້ອງໃຊ້:</u> ອີງຕາມກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງ ຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

<u>ວາລະທີ 06: ພິຈາລະນາ ແລະ ຮັບຮອງ ການປັບປຸງອັດຕາເບ້ຍລ້ຽງກອງປະຊຸມສະພາບໍລິຫານຂອງ ສະມາຊິກສະພາບໍລິຫານ</u>

<u>ລາຍລະອຽດ</u>: ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 33/ສພຊ ລົງວັນທີ 29 ທັນວາ 2022 ມາດຕາ 152 ສິດ ແລະ ໜ້າທີ່ຂອງກອງປະຊຸມສາມັນຜູ້ຖືຮຸ້ນ ກຳນົດໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນຕົກລົງເບ້ຍລ້ຽງກອງປະຊຸມສະພາບໍລິຫານ ຂອງ ສະມາຊິກສະພາບໍລິຫານ ຊຶ່ງອັດຕາເບ້ຍລ້ຽງດັ່ງກ່າວ ແມ່ນບໍ່ໄດ້ຖືກປັບປຸງຕັ້ງແຕ່ ປີ 2015 ແລະ ເພື່ອໃຫ້ສອດຄ່ອງກັບ ສະພາບໃນປະຈຸບັນ ຈຶ່ງໄດ້ມີການປັບປຸງ, ຕາມລາຍລະອຽດການປັບປຸງ ດັ່ງລຸ່ມນີ້:

ຕຳແໜ່ງ	ອັດຕາເກົ່າ	ອັດຕາໃໝ່
ປະທານສະພາບໍລິຫານ	1,500,000 ກີບຕໍ່ຄັ້ງ	5,000,000 ກີບຕໍ່ຄັ້ງ
ຮອງປະທານສະພາບໍລິຫານ	1,000,000 ກີບຕໍ່ຄັ້ງ	4,000,000 ກີບຕໍ່ຄັ້ງ
ສະມາຊິກສະພາບໍລິຫານ/ຄະນະຜູ້ອຳນວຍການ	500,000 ກີບຕໍ່ຄັ້ງ	3,000,000 ກີບຕໍ່ຄັ້ງ
ເລຂານຸການບໍລິສັດ	-	2,000,000 ກີບຕໍ່ຄັ້ງ

<u>ຄຳເຫັນຂອງສະພາບໍລິຫານ</u>: ສະພາບໍລິຫານ ໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາ ຮັບຮອງເອົາວາລະນີ້.

<u>ຄະແນນສຽງທີ່ຕ້ອງໃຊ້:</u> ອີງຕາມກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງ ຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
ຖະໜົນ: ກຳແພງເມືອງ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສ ປ ປ ລາວ ໂທ: 856 21 264834-6 ແຟັກ: 856021 264836
Kampheangmueng Rd, Phonthan Village, Xaysettha District, Vientiane Capital, Lao P.D.R, Tel: 856 21 264834-5, Fax: 856021 264836

ເລກທີ: 032/ປທລ/2025

ນະຄອນຫຼວງວຽງຈັນ, ວັນທີ: 12/05/2025

ຍິດຍັນທຶກ ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024
ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (ປທລ) ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024 ເມື່ອວັນທີ 30 ເມສາ 2025 ເວລາ 09:10 ໂມງ ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 8, ອາຄານຕະຫຼາດຫຼັກຊັບລາວ, ຖະໜົນ ກຳແພງເມືອງ ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ໂດຍມີຜູ້ຖືຮຸ້ນເຂົ້າຮ່ວມປະຊຸມ ທັງໝົດ 9 ທ່ານ ໃນນັ້ນ ຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງ ຈຳນວນ 5 ທ່ານ ແລະ ຜູ້ຖືຮຸ້ນທີ່ມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ຈຳ ນວນ 4 ທ່ານ, ເຊິ່ງຖືຮຸ້ນລວມກັນທັງໝົດ 198,354,990 ຮຸ້ນ, ເທົ່າກັບ 84.41% ຂອງຈຳນວນຮຸ້ນທັງໝົດຂອງບໍລິສັດ ຖື ວ່າຄົບອົງປະຊຸມຕາມກົດໝາຍວິສາຫະກິດ ແລະ ລະບຽບຂອງບໍລິສັດ.

ສະມາຊິກສະພາບໍລິຫານ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງທີ່ໄດ້ເຂົ້າຮ່ວມກອງປະຊຸມ ມີດັ່ງນີ້:

1. ທ່ານ ສີລາ ວຽງແກ້ວ : ປະທານສະພາບໍລິຫານ ອິດສະລະ;
2. ທ່ານ ຄຳສອນ ສິດທິໄຊ : ຮອງປະທານສະພາບໍລິຫານ;
3. ທ່ານ ນາງ ແສງເດືອນ ກ້ຽວສຸວັດ : ສະມາຊິກສະພາບໍລິຫານ;
4. ທ່ານ ວຽງຄອນ ສິດທິໄຊ : ປະທານຄະນະກຳມະການເສດຖະກິດ, ສະມາຊິກສະພາບໍລິຫານ ອິດສະລະ;
5. ທ່ານ ບຸນຖັນ ວົງສຸລີ : ປະທານຄະນະກຳມະການກວດກາຄວາມສ່ຽງພາຍໃນ, ສະມາຊິກສະພາບໍລິຫານ ອິດສະລະ;

ທ່ານ ມາກ ລຸວັນ ສະມາຊິກສະພາບໍລິຫານ ແລະ ທ່ານ ສຈ ດາວອນ ຫວ່າງວິຈິດ ສະມາຊິກສະພາບໍລິຫານ ອິດ ສະລະ ບໍ່ສາມາດເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ໄດ້ ເນື່ອງຈາກຕິດພາລະກິດ.

ໃນກອງປະຊຸມ, ຍັງມີທ່ານ ທ່ານ ຈໍຟາ ຄຳສຸກໃສ ສະມາຊິກສະພາບໍລິຫານ ອິດສະລະ ຜູ້ໃໝ່, ທ່ານ ນາງ ຈັນທະ ດອມ ເມກສະຫວັນ ຮອງຜູ້ອຳນວຍການໃຫຍ່, ຕາງໜ້າຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບ ລາວ, ຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມ, ຄະນະກວດກາ ແລະ ລົງຄະແນນສຽງ ໄດ້ເຂົ້າຮ່ວມກອງ ປະຊຸມໃນຄັ້ງນີ້.

ພິທີກອນໄດ້ແຈ້ງໃຫ້ກອງປະຊຸມຮັບຊາບບັນດາວາລະກອງປະຊຸມ, ວິທີການລົງຄະແນນສຽງ ແລະ ການນັບຜົນ ຄະແນນສຽງ.

ຫຼັງຈາກນັ້ນ, ທ່ານ ສິລາ ວຽງແກ້ວ ປະທານກອງປະຊຸມ ໄດ້ກ່າວເປີດກອງປະຊຸມ ແລະ ດຳເນີນການປະຊຸມໃນແຕ່ລະວາລະ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

<u>ວາລະທີ 01: ພິຈາລະນາ ແລະ ຮັບຮອງເອົາ ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023</u>

ປະທານກອງປະຊຸມໄດ້ລາຍງານຕໍ່ກອງປະຊຸມ: ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023 ໄດ້ຈັດຂຶ້ນໃນວັນທີ 30 ເມສາ 2024 ໂດຍກອງປະຊຸມໄດ້ພິຈາລະນາກິດຈະກຳຕ່າງໆ ເຊິ່ງກອງປະຊຸມດັ່ງກ່າວໄດ້ເຮັດບົດບັນທຶກຕາມເນື້ອໃນຂອງກອງປະຊຸມຢ່າງຖືກຕ້ອງ.

ຫຼັງປະທານກອງປະຊຸມ ໄດ້ລາຍງານວາລະນີ້ແລ້ວກໍ່ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນ ປະກອບຄຳເຫັນ ແລະ ສອບຖາມ ເຊິ່ງມີຜູ້ຖືຮຸ້ນມີຄຳເຫັນດັ່ງນີ້:

ຜູ້ຖືຮຸ້ນ: ທ່ານ ນາງ ຕຸກຕາ ແກ້ວວິຈິດ (ໄດ້ຮັບມອບສິດຈາກ ທ່ານ ໄກວັນ ກາດາວານິດ) ປະກອບຄຳເຫັນວ່າ ບົດບັນທຶກກອງປະຊຸມປີ 2023 ສະບັບພາສາອັງກິດ ໜ້າທີ 22 ມີບາງປະໂຫຍກທີ່ຄວນມີການແກ້ໄຂ ເຊິ່ງໄດ້ສົ່ງຂໍ້ມູນລາຍລະອຽດໃຫ້ທາງຄະນະທີ່ຮັບຜິດຊອບ ເພື່ອແກ້ໄຂໃຫ້ຖືກຕ້ອງ.

ທ່ານ ສິລາ ວຽງແກ້ວ, ປະທານສະພາບໍລິຫານ ອິດສະລະ: ຂອບໃຈຕໍ່ຄຳເຫັນດັ່ງກ່າວ ແລະ ບໍລິສັດຍິນດີແກ້ໄຂສະບັບພາສາອັງກິດຕາມຄຳເຫັນດັ່ງກ່າວ ດັ່ງນີ້:

<u>ກ່ອນປັບ:</u>

The shareholder: Ms. Toukta Keovichit (The representative of Mr. Kraiwal KADAVANICH(had comments and suggestion as follows: the word of nearly the term and intention to resign from the position, that's ~~nearly the term or intention to resign it~~ couldn't occur in the same time due to ~~resignation~~ matter meaning ~~of~~ stop working before determination called resignation. Thus, this person must be said that the duty has been fulfilled completely, just asking not accept to the offer to take a position of the term again. resignation is negative way, if ~~just~~ according to the word mention will be more graceful.

<u>ຫຼັງປັບ:</u>

The shareholder: Ms. Toukta KEOVICHIT (The representative of Mr. Kraiwal KADAVANICH) had comments and suggestion as follows: the word of "complete of the term" and "intention to resign" from the position, that's couldn't occur in the same time due to matter meaning stop working before determination, called resignation. Thus, this person must be said that the duty has been fulfilled completely, just asking not to accept the offer to take a position of the term again. Resignation is negative way, if according to the word mentioned will be more graceful.

ປະທານກອງປະຊຸມ ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງວາລະນີ້.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງເອົາວາລະນີ້ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 198.354.990 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.354.990 ສຽງ ຄິດເປັນ 100 %.

<u>ວາລະທີ 02: ພິຈາລະນາ ແລະ ຮັບຮອງເອົາ ບົດລາຍງານຜົນການດຳເນີນທຸລະກິດ ປະຈຳປີ 2024 ແລະ ເອກະສານລາຍງານການເງິນທີ່ຜ່ານການກວດສອບຂອງຜູ້ກວດສອບພາຍນອກ ປະຈຳປີ 2024</u>

ປະທານກອງປະຊຸມໄດ້ລາຍງານຕໍ່ກອງປະຊຸມ:

I. **ຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2024 ມີດັ່ງນີ້:**

ໃນປີ 2024 ບໍລິສັດໄດ້ຮັບຜົນສຳເລັດໃນການນຳເຂົ້ານ້ຳມັນທາງເຮືອ ໂດຍຜູ້ສະໜອງຈາກປະເທດສິງກະໂປຜ່ານການເຊົ່າທ່າເຮືອ ແລະ ສາງເກັບນ້ຳມັນທີ່ປະເທດຫວຽດນາມ, ໂດຍຜ່ານການນຳເຂົ້ານ້ຳມັນທາງເຮືອ 2 ຄັ້ງນີ້ ລວມຈຳນວນ 52ລ້ານກວ່າລິດ ແລະ ໄດ້ນຳເຂົ້າມາຈຳໜ່າຍໃຫ້ແກ່ສະຖານີບໍລິການປ້ຳນ້ຳມັນ, ລູກຄ້າ B2B ແລະ ບໍລິສັດຈັດຈຳໜ່າຍພາຍໃນດ້ວຍກັນ.

❖ **ຕາຕະລາງຍອດຂາຍລູກຄ້າໂຄງການ:**

1) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ແຜນປີ 2024 ກັບ ຍອດຂາຍຕົວຈິງ

ລູກຄ້າ	ແຜນ 2024	ຍອດຂາຍ 2024	ສ່ວນຕ່າງ ຍອດຂາຍ 2024	
	ລິດ	ລິດ	ລິດ	ເປັນ %
B2B	68,277,000	59,605,000	-8,672,000	-12.70%

2) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ຍອດຂາຍປີ 2024 ກັບ ຍອດຂາຍປີ 2023

ລູກຄ້າ	ຍອດຂາຍ 2023	ຍອດຂາຍ 2024	ສ່ວນຕ່າງ ຍອດຂາຍ 2023-2024	
	ລິດ	ລິດ	ລິດ	ເປັນ %
B2B	77,764,000	59,605,000	-18,159,000	-23.75%

❖ **ຕາຕະລາງຍອດຂາຍລູກຄ້າ Spot**

ລູກຄ້າ	ແຜນ 2024	ຍອດຂາຍ 2024	ສ່ວນຕ່າງ ຍອດຂາຍ 2024	
	ລິດ	ລິດ	ລິດ	ເປັນ %
SPOT	82,900,000	121,912,458	39,012,458	47.06%

❖ **ຕາຕະລາງຍອດຂາຍລູກຄ້າປ້ຳນ້ຳມັນ:**

1) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ແຜນປີ 2024 ກັບ ຍອດຂາຍຕົວຈິງ

ລ/ດ	ລູກຄ້າ	ແຜນ	ຍອດຂາຍ	ສ່ວນຕ່າງ ແຜນ-ຍອດຂາຍ	
		ລິດ	ລິດ	ລິດ	ເປັນ %
1	ປ້ຳນ້ຳມັນພລາຕິນຳ/Platinum	18,350,000	12,955,450	-5,394,550	-29.40%
2	ປ້ຳນ້ຳມັນໂກລ/Gold	32,426,000	31,927,000	-499,000	-1.54%
3	ປ້ຳນ້ຳມັນມາດຕະຖານ/ Standard	25,500,000	26,907,550	1,407,550	5.52%
4	ປ້ຳນ້ຳມັນ ທ້ອງຖິ່ນ/Thongthin	15,500,000	11,482,000	-4,018,000	25.92%-
ລວມ		**91,776,000**	**83,272,000**	**-8,504,000**	**-9.27%**

2) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ຍອດຂາຍປີ 2024 ກັບ ຍອດຂາຍປີ 2023

ລ/ ດ	ລູກຄ້າ	ຍອດຂາຍ 2023	ຍອດຂາຍ 2024	ສ່ວນຕ່າງ ຍອດຂາຍ 2023-2024	
		ລິດ	ລິດ	ລິດ	ເປັນ %
1	ປ້ຳນ້ຳມັນພລາຕິນຳ/Platinum	11,352,000	12,955,450	1,603,450	14.12%
2	ປ້ຳນ້ຳມັນ ໂກລ/Gold	27,782,000	31,927,000	4,145,000	14.92%
3	ປ້ຳນ້ຳມັນມາດຕະຖານ/Standard	25,813,000	26,907,550	1,094,550	4.24%
4	ປ້ຳນ້ຳມັນທ້ອງຖິ່ນພັດທະນາ/ Thongthin	10,442,000	11,482,000	1,040,000	9.96%
ລວມ		**75,389,000**	**83,272,000**	**7,883,000**	**10.46%**

❖ **ຕາຕະລາງຍອດຂາຍລູກຄ້າທັງໝົດ**

1) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ແຜນປີ 2024 ກັບ ຍອດຂາຍປີ 2024

ລ/ດ	ລູກຄ້າ	ແຜນ 2024	ຍອດຂາຍ 2024	ສ່ວນຕ່າງ ແຜນ-ຍອດຂາຍ 2024	
		ເປັນ ລິດ	ເປັນ ລິດ	ເປັນ ລິດ	ເປັນ %
1	ລູກຄ້າໂຄງການ/B2B	68,277,000	59,605,000	8,672,000	-12.70%
2	ລູກຄ້າປ້ຳນ້ຳມັນ/Gas Station	97,776,000	83,272,000	14,504,000	-14.83%
3	SPOT	97,900,000	121,912,458	-24,012,458	24.53%
ລວມ		257,953,000	264,789,458	836,458	0.32%

2) ຕາຕະຕາງປຽບທຽບຍອດຂາຍ ລະຫວ່າງ ຍອດຂາຍ 2023 ກັບ ຍອດຂາຍ 2024

ລ/ດ	ລູກຄ້າ	ຍອດຂາຍ 2023	ຍອດຂາຍ 2024	ສ່ວນຕ່າງ ຍອດຂາຍ 2023-2024	
		ເປັນ ລິດ	ເປັນ ລິດ	ເປັນ ລິດ	ເປັນ %
1	ລູກຄ້າໂຄງການ/B2B	60,904,000	59,605,000	-1,299,000	-2.13%
2	ລູກຄ້າປ້ຳນ້ຳມັນ/Gas Station	75,389,000	83,272,000	7,883,000	10.46%
3	SPOT	85,866,378	121,912,458	36,046,080	41.98%
ລວມ/Total		222,159,378	264,789,458	42,630,080	19.19%

❖ ການບໍລິຫານສາງນ້ຳມັນ ໃນປີ 2024

1. ການຮັບເຂົ້າ ແລະ ການຈ່າຍອອກສາງນ້ຳມັນທັງໝົດ

ລ/ດ	ລາຍການ	2023	2024	ສ່ວນຕ່າງ 2023-2024	
		ເປັນ ລິດ	ເປັນ ລິດ	ເປັນ ລິດ	ເປັນ %
1	ການຮັບເຂົ້າສາງທັງໝົດ	136,770,415	149,042,754	12,272,339	8.97%
2	ການຈ່າຍອອກສາງທັງໝົດ	136,588,881	147,605,508	11,016,627	8.07%
ລວມ		273,359,296	273,359,296	296,648,966	23,288,966

2. ຄ່າສະເລ່ຍອາຍລະເຫີຍ ຂອງ ນ້ຳມັນ ແຕ່ລະຊະນິດ:

- ຄ່າສະເລ່ຍອາຍລະເຫີຍ ຂອງ ນ້ຳມັນແອດຊັ່ງ 95 ໃນລະຫວ່າງເກັບຮັກສາເທົ່າກັບ -1,205ລິດ ຂອງຍອດຮັບທັງໝົດ 849,727 ລິດ ຢູ່ໃນເກນມາດຕະຖານໃນອັດຕາສະເລ່ຍ -0.15 ສ່ວນຮ້ອຍ;
- ຄ່າສະເລ່ຍອາຍລະເຫີຍ ຂອງ ນ້ຳມັນແອດຊັ່ງ 91 ໃນລະຫວ່າງເກັບຮັກສາເທົ່າກັບ -42.412 ລິດ ຂອງຍອດຮັບທັງໝົດ 35,882,383 ລິດ ຢູ່ໃນເກນມາດຕະຖານໃນອັດຕາສະເລ່ຍ -0.12 ສ່ວນຮ້ອຍ;
- ຄ່າສະເລ່ຍອາຍລະເຫີຍ ຂອງ ນ້ຳມັນກາຊວນ ໃນລະຫວ່າງເກັບຮັກສາເທົ່າກັບ -65,388 ລິດ ຂອງຍອດຮັບທັງໝົດ 112,310,644 ລິດ ຢູ່ໃນເກນມາດຕະຖານໃນອັດຕາສະເລ່ຍ -0.06 ສ່ວນຮ້ອຍ.

❖ ບຸກຄະລາກອນ

ບໍລິສັດ ປິໂຕຣລ້ຽມ ເທຣດດິ້ງລາວ ມະຫາຊົນ ມີພະນັກງານທັງໝົດຈຳນວນ 131 ຄົນ, ໃນນັ້ນມີເພດຍິງຈຳນວນ 56 ຄົນ.

ການດຳເນີນງານດ້ານບຸກຄະລາກອນ ປະຈຳປີ 2024 ຜ່ານມາແມ່ນເນັ້ນໃສ່ການຮັບປະກັນຄວາມພຽງພໍ ຂອງ ພະນັກງານ, ການສັນຫາບຸກຄະລາກອນທີ່ເໝາະສົມເຂົ້າຕຳແໜ່ງທີ່ຫວ່າງຢ່າງມີປະສິດທິພາບ, ເບິ່ງແຍງສະຫວັດດີການຂອງ ພະນັກງານຕາມກົດລະບຽບພາຍໃນບໍລິສັດ ແລະ ຕາມກົດໝາຍແຮງງານວ່າງອອກ. ພ້ອມນີ້ກໍ່ຍັງໄດ້ຈັດໃຫ້ມີການຝຶກ ອົບຮົມໃນຫົວຂໍ້ຕ່າງໆ ເພື່ອເພີ່ມທັກສະ ແລະ ຄວາມຮັບຮູ້ຂອງພະນັກງານພາຍໃນອົງກອນດັ່ງນີ້:

- ການເຜີຍແຜ່ນະໂຍບາຍບໍລິສັດ, ມາດຕະຖານ ISO ແລະ ກົດໝາຍປະຈຳສີກປີ 2024;
- ເຜີຍແຜ່ກົດລະບຽບ ແລະ ນະໂຍບາຍບໍລິສັດ (ສຳລັບພະນັກງານເຂົ້າໃໝ່);
- ເຜີຍແຜ່ລະບຽບຄວາມປອດໄພ ແລະ ສິ່ງແວດລ້ອມ;
- ຝຶກອົບຮົມລະບົບບັນຊີມາດຕະຖານໃໝ່ (IFRS);
- ຝຶກອົບຮົມການຂັບຂີ່ປອດໄພ;
- ຝຶກອົບຮົມການແຈ້ງພາສີອາກອນທົ່ວໄປ;
- ຝຶກອົບຮົມການດັບໄຟ;
- ເຜີຍແຜ່ຂອບເຂດສິດອຳນາດໃນການອະນຸມັດເອກະສານພາຍໃນ.

❖ ລາຍການຊ່ວຍເຫຼືອສັງຄົມຕ່າງໆ ປະຈຳປີ 2024

ລດ	ລາຍການ	ຈຳນວນ
1	ອຸປະຖຳໂຄງການທົດລອງໄຂ່ຕົ້ມ ໃຫ້ນັກຮຽນ ອະນຸບານ ທີ່ເມືອງລ້ອງຊານ	101,000,000.00
2	ສະໜັບສະໜຸນ ຈ່າຍທອດສົດ ງານມະຫາກຳບຸນຊ້າງ ທີ່ແຂວງໄຊຍະບຸລີ ປະຈຳປີ2024	10,000,000.00
3	ຄ່າບຳລຸງຮັກສາ ວົງວຽນດອນໜູນ ປະຈຳປີ 2024	82,184,640.00
4	ຊຸກຍູ້ນ້ຳມັນລົດກຸ້ໄຟ 1624 ປະຈຳປີ 2024	37,200,000.00
5	ຊຸກຍູ້ນ້ຳມັນລົດກຸ້ໄຟ 1623 ປະຈຳປີ 2024	23,920,800.00
6	ຊຸກຍູ້ນ້ຳມັນລົດ ອົງການກາແດງ ປະຈຳປີ 2024	23,484,000.00
7	ງົບສະໜັບສະໜຸນງານ The pianist vientiane chamber orchestra concert	62,409,000.00
8	ຕັ້ງໜ້າຄ່າສະໜັບສະໜຸນງານຜະລິດຕະພັນລາວ (made in laos) ງວດທີ 01	150,000,000.00
9	ຮ່ວມເຮັດບຸນກັບມຸນລະນິທິກຸ້ໄຟ 1624	1,000,000.00
10	ອຸປະຖຳອົງການກາແດງເນື່ອງໃນວັນຊາດສົ່ງກະໂປ	22,143,000.00
11	ອຸປະຖຳການສ້າງເດີນບານສົ່ງ ສຸນເສຍອົງຄະ 790	31,480,000.00
12	ອຸປະຖຳແກ້ໄຂຜົນກະທົບຈາກໄພພິບັດນ້ຳຖ້ວມຢູ່ທີ່ແຂວງຫຼວງນ້ຳທາ	100,000,000.00
13	ເບີກຈ່າຍຜ້າຫົ່ມໄປບໍລິຈາກຢູ່ແຂວງບໍ່ແກ້ວ+ສຸນເສຍອົງຄະ790+ຊ່ວຍໄພນ້ຳຖ້ວມຢູ່ຫຼວງນ້ຳທາ	121,243,515.00
14	ອຸປະຖຳການຈ່າຍທອດສົດໃນງານບຸນຊ່ວງເຮືອອອກພັນສາປະວໍລະນາ ທີ່ແຂວງໄຊຍະບຸລີ	10,000,000.00
15	ສະໜັບສະໜຸນງານສະເຫຼີມສະຫຼອງການສ້າງຕັ້ງ ACMF ຄົບຮອບ 20ປີ ແລະ ກອງປະຊຸມສາກົນ	10,000,000.00
16	ສະໜັບສະໜຸນການແຜ່ປັດໃຈຍັບໃຊ້ກອງປະຊຸມຄັ້ງທີ II ຄະນະພັກຮາຖານກຸ່ມບໍລິສັດພິງສະຫວັນ	3,000,000.00
17	ສະໜັບສະໜຸນກອງປະຊຸມສະຫລຸບວຽກງານອຸດສາຫະກຳ ແລະ ການຄ້າ ປະຈຳປີ 2023	120,000,000.00
18	ການລະດົມທຶນສ້າງຫໍລັກເມືອງປາກເຊ ແຂວງຈຳປາສັກ	2,000,000,000.00
19	ເບີກເງິນອຸປະຖຳມຸນນິທິ ພາກລັດ	500,000,000.00
20	ຊ່ວຍເຫຼືອສ້າງໂຮງຮຽນປະຖົມ ປ1-ປ5 ຢູ່ທີ່ບ້ານແກ້ງໄຊນ້ອຍ ເມືອງພະລານໄຊ	50,000,000.00
21	ຊ່ວຍເຫລືອ ໄພພິບັດນ້ຳຖ້ວມ ຫລວງນ້ຳທາ	200,000,000.00
22	ເຫຼືອໄພພິບັດນ້ຳຖ້ວມ ປີ2024	242,728,000.00
23	ຊ່ວຍເຫລືອໄພພິບັດນ້ຳຖ້ວມ ຫລວງນ້ຳທາ	200,000,000.00
24	ຊ່ວຍເຫຼືອໄພພິບັດນ້ຳຖ້ວມ ປີ2024	242,728,000.00
	ລວມ	**4,344,520,955.00**

❖ ການມອບພັນທະອາກອນຕ່າງໆ

ປະເພດອາກອນ	ປີ 2020	ປີ 2021	ປີ 2022	ປີ 2023	ປີ 2024
ພາສີນຳເຂົ້າ	30,754,310,400	84,433,127,700	204,387,894,555	212,376,419,048	264,259,338,820
ອກຊ	104,628,383,000	268,779,530,700	214,463,864,169	118,770,619,941	144,377,102,610
ອມພ	55,781,791,100	143,983,943,199	243,242,799,714	231,616,178,284	374,378,918,119
ບຸລະນະທາງ	76,018,280,000	107,570,320,000	123,195,666,360	112,531,120,000	133,035,869,081
ຄ້ງແຮ	195,899,410,000	109,298,940,000	86,953,600,000	154,263,520,000	182,209,442,966
ອິມິດເຕ້	877,134,000	261,876,000	-	-	-
ຄຸນນະພາບ	2,339,024,000	2,764,776,000	3,703,790,000	7,574,210,000	8,954,337,326
ໃບແຈ້ງພາສີ	-	130,714,999	181,957,300	289,796,050	506,315,000
ຄ່າຢອດສານ ມາກເກ໊	-	-	-	336,330,000	21,914,208,838
ອມພ ຈ່າຍເພີ້ມ ປະຈຳເດືອນ		26,804,172,170	24,156,455,500	43,893,953,108	56,189,418,328
ອາກອນກຳໄລ	-	52,884,234	-	7,900,000,000	1,400,000,000
ອາກອນເງິນເດືອນ	-	441,733,970	456,209,631	2,085,594,446	3,764,400,977
ລວມ:	**466,298,332,500**	**744,522,018,973**	**900,742,237,229**	**891,637,740,877**	**1,190,989,352,063**

II. **ເອກະສານລາຍງານການເງິນ ປະຈຳປີ 2024 ສາມາດສະຫຼຸບຕົວເລກໄດ້ດັ່ງນີ້:**

ຫົວໜ່ວຍ: ກີບ

ລາຍການ	2024 (ສະບັບຮ່າງ)	2023
ຊັບສິນທັງໝົດ	3,611,994,774,826	2,242,512,137,619
ໜີ້ສິນທັງໝົດ	2,660,411,214,307	1,673,115,747,273
ສ່ວນຂອງຜູ້ຖືຮຸ້ນ	951,583,560,519	569,396,390,346
ລາຍຮັບທັງໝົດ	5,152,669,215,707	3,877,808,420,108
ກຳໄລ/(ຂາດທຶນ) ສຸດທິ	221,387,304,124	12,406,381,129
ກຳໄລສຸດທິຕໍ່ຮຸ້ນ	935	50

ຫຼັງປະທານກອງປະຊຸມ ໄດ້ລາຍງານອາລະນີ້ແລ້ວກໍ່ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນ ປະກອບຄຳເຫັນ ແລະ ສອບຖາມ ເຊິ່ງມີຜູ້ຖືຮຸ້ນມີຄຳເຫັນດັ່ງນີ້:

ຜູ້ຖືຮຸ້ນ: ທ່ານ ນາງ ຕຸກຕາ ແກ້ວວິຈິດ (ໄດ້ຮັບມອບສິດຈາກ ທ່ານ ໄກວັນ ກາດາວານິດ) ໄດ້ຝາກຄຳເຫັນຜ່ານທາງເລຂາ ກອງປະຊຸມ ຕິດພັນກັບ**ລາຍການຊ່ວຍເຫຼືອສັງຄົມຕ່າງໆ ປະຈຳປີ 2024** ດັ່ງລຸ່ມນີ້:

- ເປັນຫຍັງ ລາຍການ ລຳດັບ 1 "ອຸປະຖຳໂຄງການທົດລອງສະໜອງໄຂ່ຕົ້ມ ໃຫ້ນັກຮຽນ ອະນຸບານ ທີ່ເມືອງລ້ອງຊານ" ຈຶ່ງໃຊ້ງົບປະມານຕ່ຳຈາກປີຜ່ານມາ. ແລະ ລາຍການລຳດັບ 3 "ຄ່າບຳລຸງຮັກສາ ວົງວຽນດອນໜູນ ປະຈຳປີ 2024" ?;
- ລາຍການ ລຳດັບ 4 "ຊຸກຍູ້ນ້ຳມັນລົດ 1624 ປະຈຳປີ 2024" ແລະ ລຳດັບ 5 "ຊຸກຍູ້ນ້ຳມັນລົດ 1623 ປະຈຳປີ 2024" ຄວນໃສ່ຊັດເຈນວ່າລົດກູ້ໄພ;
- ລາຍການ ລຳດັບ 9 "ຮ່ວມເຮັດບຸນກັບມູນລະນິທິກູ້ໄພ 1624" ຈຳນວນເງິນດັ່ງກ່າວເປັນຈຳນວນເງິນໜ້ອຍ ເຊິ່ງບໍ່ເປັນສາລະສຳຄັນທຽບກັບລາຍການອື່ນ. ດັ່ງນັ້ນ, ຄວນເອົາໄປລວມກັບລາຍການລຳດັບ 4 ຂຶ້ນດ້ວຍຄຳວ່າ "ແລະ" ເຊິ່ງຈະເໝາະສົມກວ່າ.

ທ່ານ ຄຳພຸດ ສົມບຸນ, ຕາງໜ້າສະພາບໍລິຫານ ແລະ ຄະນະຮັບຜິດຊອບຈັດກຽມເອກະສານ: ຂໍຂອບໃຈ ທ່ານທີ່ໃຫ້ຂໍ້ມູນ ແລະ ປະກອບຄຳເຫັນ ໃນສ່ວນຂອງ ລາຍການ ລຳດັບ 1 "ອຸປະຖຳໂຄງການທົດລອງສະໜອງໄຂ່ຕົ້ມ ໃຫ້ນັກຮຽນ ອະນຸບານ ທີ່ເມືອງລ້ອງຊານ" ເຊິ່ງຕົວເລກງົບດັ່ງກ່າວ ແມ່ນມີຢູ່ໃນງົບການເງິນຂອງບໍລິສັດມາແລ້ວ 2 ປີ ເປັນ ໂຄງການທີ່ເຮັດຮ່ວມກັບກຸ່ມບໍລິສັດພີງສະຫວັນ ໃນການຊ່ວຍເຫຼືອນັກຮຽນໃຫ້ມີໂພສະນາການອາຫານທີ່ດີ ແລະ ໃນສ່ວນ ຂອງງົບປະມານຊ່ວຍເຫຼືອບົວລະບັດສວນວົງວຽນດອນໜູນກໍ່ແມ່ນໂຄງການຊ່ວຍເຫຼືອປັບປຸງທັດສະນີຍະພາບຂອງວົງວຽນ ທີ່ບໍລິສັດເປັນຜູ້ອຸປະຖຳຄ່າໃຊ້ຈ່າຍໃນການກໍ່ສ້າງສືບມາ. ສ່ວນລາຍການອື່ນໆ ທາງເຮົາຈະນຳໄປກວດຄືນ ແລະ ປັບປຸງຕາມ ຄຳເຫັນຂອງທ່ານ.

ທ່ານ ສິລາ ວຽງແກ້ວ, ປະທານສະພາບໍລິຫານ ອິດສະລະ: ຖືວ່າເປັນການຊີ້ແຈງຈາກທາງບໍລິສັດ ແລະ ບໍລິສັດ ຍິນດີຈະນຳໄປກວດສອບ ແລະ ປັບປຸງໃຫ້ຖືກຕ້ອງ ແລະ ເໝາະສົມ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງວາລະນີ້.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງເອົາວາລະນີ້ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 198.354.990 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.354.990 ສຽງ ຄິດເປັນ 100 %.

<u>ວາລະທີ 03: ພິຈາລະນາ ແລະ ຮັບຮອງບໍ່ໃຫ້ມີການປັນຜົນ ຈາກຜົນການດຳເນີນທຸລະກິດປະຈຳປີ 2024 ເນື່ອງມາຈາກບໍລິສັດ ຂາດທຶນສະສົມໃນຊຸມປີຜ່ານມາ</u>

ປະທານກອງປະຊຸມໄດ້ລາຍງານຕໍ່ກອງປະຊຸມ: ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 33/ສພຊ ລົງວັນທີ 29 ທັນວາ 2022, ມາດຕາ 153 "ການແບ່ງເງິນປັນຜົນ" ຫ້າມບໍ່ໃຫ້ບໍລິສັດຈ່າຍເງິນປັນຜົນ ເມື່ອບໍລິສັດຍັງມີການຂາດທຶນສະສົມຢ່າງຕໍ່ເນື່ອງໃນຊຸມປີຜ່ານມາ.

ດັ່ງນັ້ນ, ສະພາບໍລິຫານ ຈຶ່ງເຫັນດີຮັບຮອງການບໍ່ປັນຜົນ ຈາກຜົນການດຳເນີນທຸລະກິດປະຈຳປີ 2024 ເນື່ອງມາຈາກບໍລິສັດຍັງມີການຂາດທຶນສະສົມຢ່າງຕໍ່ເນື່ອງໃນຊຸມປີຜ່ານມາ ແລະ ສະເໜີນຳກຳໄລສຸດທິປະຈຳປີ ເພື່ອຫັກເຂົ້າຂາດທຶນສະສົມລ້ຳຄ້າແບ່ງປັນ.

ຫຼັງປະທານກອງປະຊຸມ ໄດ້ລາຍງານວາລະນີ້ແລ້ວກໍ່ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນ ປະກອບຄຳເຫັນ ແລະ ສອບຖາມ ເຊິ່ງບໍ່ມີຜູ້ຖືຮຸ້ນທ່ານໃດຖາມ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງວາລະນີ້.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງເອົາວາລະນີ້ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 198.354.990 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.354.990 ສຽງ ຄິດເປັນ 100 %.

<u>ວາລະທີ 04: ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2025</u>

ປະທານກອງປະຊຸມ ໄດ້ມອບໃຫ້ ທ່ານ ນາງ ຈັນທະດອນ ເມກສະຫວັນ, ຮອງຜູ້ອຳນວຍການໃຫຍ່ ເປັນຜູ້ລາຍງານຕໍ່ກອງປະຊຸມ: ກ່ຽວກັບແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2025 ມີດັ່ງນີ້:

ທິດທາງໃນປີ 2025 ຍັງຄົງເປັນແນວທາງໃນການສືບຕໍ່ສະໜອງນ້ຳມັນຢ່າງມີສະຖຽນລະພາບແກ່ສັງຄົມ ສ້າງຄວາມເຊື່ອໝັ້ນຕໍ່ຜູ້ຊົມໃຊ້ບໍລິການ ທາງດ້ານຄຸນນະພາບ ແລະ ການບໍລິການຂອງບໍລິສັດ ດ້ວຍການເພີ່ມສະຖານີບໍລິການປ້ຳເພີ່ມເຕີມ, ສືບຕໍ່ແຜນຍຸດທະສາດນຳເຂົ້ານ້ຳມັນທາງເຮືອຜ່ານທ່າເຮືອປະເທດຫວຽດນາມ ເພື່ອຫຼຸດຜ່ອນຄວາມສ່ຽງຂອງການພຶ່ງພາແຕ່ການສະໜອງຈາກປະເທດໃດໜຶ່ງເທົ່ານັ້ນຕາມຍຸດທະສາດຂອງພັກ-ລັດ ວາງອອກ.

ໃນປີ 2025 ຈະເປັນປີທີ່ມີຄວາມທ້າທາຍຄັ້ງໃຫຍ່ ສຳລັບບໍລິສັດ ເນື່ອງຈາກພວກເຮົາຈະຕ້ອງໄດ້ປັບປຸງລະບົບການບໍລິຫານຈັດການ ຈາກການດຳເນີນທຸລະກິດທີ່ຜ່ານມາ ໂດຍເລັ່ງໃສ່ການສ້າງສະຖານີບໍລິການລະດັບ Platinum ໃນຫົວເມືອງໃຫຍ່ໃຫ້ຄົບທົ່ວປະເທດ, ເພີ່ມສາງບັນຈຸແຮ່ທາດນ້ຳມັນເພື່ອການສະຫຼອງທີ່ໝັ້ນຄົງ ລວມເຖິງຍຸດທະສາດທາງການຕະຫຼາດໃນການນຳເຂົ້ານ້ຳມັນຈາກຝ່າປະເທດຫວຽດນາມເພີ່ມເຕີມ.

1) ການຂະຫຍາຍຕົວຂອງການຂາຍ.

- ໂຄງການ B2B: ເພີ່ມປະລິມານການສະໜອງນ້ຳມັນໃຫ້ຫຼາຍຂຶ້ນ ໂດຍໃຊ້ປະໂຫຍດຈາກຄວາມໄດ້ປຽບດ້ານ ອຸປະທານ ແລະ ໂລຈິສຕິກຂອງບໍລິສັດ (ທຽບກັບຜູ້ນຳເຂົ້າລາຍອື່ນ) ພ້ອມກັບການປະຕິບັດຕາມກົດ ລະບຽບຂອງລັດຖະບານ; ເພີ່ມຖານລູກຄ້າໃນຮູບແບບ B2B ໃຫ້ຫຼາຍຂຶ້ນ (ໂດຍສະເພາະແມ່ນ ກຸ່ມລູກຄ້າ ຂຸດຄົ້ນບໍ່ແຮ່ ແລະ ຂາຍສົ່ງ);
- ການຂາຍຍ່ອຍ: ເພີ່ມປະລິມານການສະໜອງນ້ຳມັນໃຫ້ກັບລູກຄ້າປະຈຸບັນໃຫ້ຫຼາຍຂຶ້ນ ແລະ ລູກຄ້າ COCO ລາຍໃໝ່ທີ່ຫາມາໄດ້. ປັບປຸງພາບລັກ ແລະ ເພີ່ມມູນຄ່າໃຫ້ກັບທຸລະກິດນ້ຳມັນ, ທຸລະກິດຮ້ານ ສະດວກຊື້ ແລະ ຮ້ານກາເຟໃນປ້ຳນ້ຳມັນ ເພື່ອໃຫ້ມີກຳໄລ ແລະ ປະລິມານການຂາຍເພີ່ມຂຶ້ນ:

  - ສົ່ງເສີມໃຫ້ລູກຄ້ານຳໃຊ້ການເຕີມນ້ຳມັນດ້ວຍບັດ (ບັດ PlusCard);
  - ພັດທະນາລະບົບການຈຳໜ່າຍນ້ຳມັນເຄື່ອງໃຫ້ໄດ້;
  - ພັດທະນາຮ້ານກາເຟ.

- ການຕະຫຼາດ ແລະ ການສົ່ງເສີມການຂາຍ ໂດຍເພີ່ມກຳໄລໃຫ້ຫຼາຍຂຶ້ນ ໂດຍການຫຼຸດຕົ້ນທຶນ. ສືບຕໍ່ຕິດຕາມ ແລະ ຮ່ວມມືກັບບັນດາບໍລິສັດອຸດສາຫະກຳ ເພື່ອຮັກສາສ່ວນແບ່ງທາງການຕະຫຼາດ/ຫຼຸດຄ່າໃຊ້ຈ່າຍດ້ານຕົ້ນ ທຶນ, ປະກັນໄພ ແລະ ການຂົນສົ່ງສິນຄ້າ.

2) ເພີ່ມປະສິດທິພາບທາງດ້ານການດຳເນີນງານ

- ສືບຕໍ່ ບໍລິຫານຈັດການຄ່າໃຊ້ຈ່າຍດ້ານການດຳເນີນງານ ແລະ ຄ່າໃຊ້ຈ່າຍດ້ານການລົງທຶນໃຫ້ມີປະສິດທິພາບ ໂດຍການດັດປັບໂຄງສ້າງ ແລະ ການລົງທຶນຂອງບໍລິສັດ ໃຫ້ໄດ້ຜົນຕອບແທນໄວທີ່ສຸດ;
- ປັບປຸງປະສິດທິພາບໃນການດຳເນີນງານຄືນໃໝ່, ຂະຫຍາຍສາງນ້ຳມັນໃຫ້ສາມາດບັນຈຸປະລິມານນ້ຳມັນໄດ້ ຫຼາຍຂຶ້ນ ແລະ ນຳໃຊ້ໃຫ້ເກີດປະໂຫຍດສູງສຸດ ເພື່ອຫຼຸດຜ່ອນການລົງທຶນໃນການຂະຫຍາຍສາງນ້ຳມັນ;

3) ນະໂຍບາຍທາງດ້ານການເງິນ

- ຫຼຸດອັດຕາສ່ວນລູກໜີ້ການຄ້າຂອງບໍລິສັດໃນປີ 2024 ໃຫ້ຫຼາຍທີ່ສຸດ;
- ຫຼຸດຜ່ອນຄວາມສ່ຽງສິນເຊື່ອເກີນບັນຊີຂອງບໍລິສັດ ກັບບັນດາຜູ້ສະໜອງ;
- ບໍລິຫານ ຄວາມສ່ຽງດ້ານສິນເຊື່ອຂອງລາຄານ້ຳມັນອ້າງອີງໃນປະຈຸບັນ;
- ຊອກຫາຊ່ອງທາງຫຼຸດຄວາມສ່ຽງ ການຂາດທຶນຈາກອັດຕາແລກປ່ຽນໃຫ້ຫຼາຍທີ່ສຸດ.

4) ວັດທະນະທຳອົງກອນ

- ສົ່ງເສີມ ພະນັກງານທີ່ມີປະສິດທິພາບສູງ ໄປສູ່ບົດບາດໜ້າວຽກທີ່ທ້າທາຍຍິ່ງຂຶ້ນ;
- ພັດທະນາຂີດຄວາມສາມາດຂອງພະນັກງານ - ສົ່ງເສີມການກ້າວຂ້າມໄປສູ່ການປ່ຽນແປງ ແລະ ຝຶກອົບຮົມ ໜ້າວຽກໃນສາຍງານອື່ນ;
- ຊຸກຍູ້ ໃຫ້ມີການຄິດຄົ້ນນະວັດຕະກຳໃໝ່ໆ.

5) ແຜນຍອດຂາຍໃນປີ 2025

i) ລູກຄ້າໂຄງການ/B2B

ລູກຄ້າ	ແຜນ ປີ 2025 (ລິດ)
B2B & SPOT	**294,452,000**

ii) ລູກຄ້າປ້ຳນ້ຳມັນ

ລ/ດ	ລູກຄ້າ	ແຜນ ປີ 2025 (ລິດ)
1	ປ້ຳນ້ຳມັນ ພລາຕິນ້ຳ/Platinum	**92,314,240**
2	ປ້ຳນ້ຳມັນ ໂກລ/Gold	
3	ປ້ຳນ້ຳມັນ ມາດຕະຖານ/Standard	
4	ປ້ຳນ້ຳມັນ ທ້ອງຖິ່ນພັດທະນາ/Thongthin	
ລວມ		**92,314,240**

ນອກຈາກຂະຫຍາຍຍອດຂາຍນ້ຳມັນແລ້ວ ຍັງມີການຂະຫຍາຍປ້ຳນ້ຳມັນ ເພີ່ມອີກ 10 ປ້ຳ ຄືດັ່ງນີ້:

- ປ້ຳນ້ຳມັນ ມາດຕະຖານ/Standard ຈຳນວນ 10 ປ້ຳ.

iii) ລູກຄ້ານ້ຳມັນເຕົາ, ຢາງໝາກຕອຍ ແລະ ນ້ຳມັນເຄື່ອງ

ລ/ດ	ລູກຄ້າ	ແຜນ ປີ 2025 (ລິດ)
1	ນ້ຳມັນເຕົາ	ຕາມການສັ່ງຊື້ຂອງ ລູກຄ້າ
2	ຢາງໝາກຕອຍ	ຕາມການສັ່ງຊື້ຂອງ ລູກຄ້າ
3	ນ້ຳມັນເຄື່ອງ	ຕາມການສັ່ງຊື້ຂອງ ລູກຄ້າ
ລວມ/Total		

ຫຼັງຈາກທ່ານ ທ່ານ ນາງ ຈັນທະດອນ ເມກສະຫວັນ, ຮອງຜູ້ອຳນວຍການໃຫຍ່ ໄດ້ລາຍງານໂດຍຫຍໍ້ໃນວາລະນີ້ ແລ້ວ ກໍ່ໄດ້ມອບເວທີຄືນໃຫ້ ປະທານກອງປະຊຸມ ແລະ ທ່ານກໍ່ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນ ປະກອບຄຳເຫັນ ແລະ ສອບຖາມ ເຊິ່ງບໍ່ມີຜູ້ຖືຮຸ້ນທ່ານໃດຖາມ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງວາລະນີ້.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງເອົາວາລະນີ້ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 198.354.990 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.354.990 ສຽງ ຄິດເປັນ 100 %.

<u>ວາລະທີ 05: ພິຈາລະນາ ແລະ ຮັບຮອງ ແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກຄື ບໍລິສັດ PriceWaterhouseCooper (Lao) Sole Co., Ltd ("PwC") ພ້ອມທັງກຳນົດຄ່າຈ້າງ ປະຈຳປີ 2024 ບໍ່ເກີນ 37,000 ໂດລາສະຫະລັດ</u>

ປະທານກອງປະຊຸມໄດ້ລາຍງານຕໍ່ກອງປະຊຸມ: ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 33/ສພຊ ລົງວັນທີ 29 ທັນວາ 2022 ມາດຕາ 152 ສິດ ແລະ ໜ້າທີ່ຂອງກອງປະຊຸມສາມັນຜູ້ຖືຮຸ້ນ ກຳນົດໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນເປັນຜູ້ເລືອກຕັ້ງຜູ້ກວດສອບບັນຊີ ແລະ ຄ່າຈ້າງຂອງຜູ້ກວດສອບບັນຊີ ໂດຍສະພາບໍລິຫານໄດ້ພິຈາລະນາເຫັນຄວນໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາແຕ່ງຕັ້ງ PWC ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ປະຈຳປີ 2025 ໂດຍກຳນົດຄ່າຈ້າງບໍ່ເກີນ 37,000 ໂດລາສະຫະລັດ; PWC ເປັນບໍລິສັດກວດສອບບັນຊີພາຍນອກທີ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ. ປທລ ໄດ້ໃຊ້ບໍລິການ PWC ເປັນຜູ້ກວດສອບບັນຊີພາຍນອກແຕ່ປີ 2018 ຫາ

2024 ເຫັນວ່າ PWC ມີປະສົບການ, ມີຄວາມລະອຽດຮອບຄອບໃນການທົບທວນ. ຊຶ່ງລາຍລະອຽດຄ່າຈ້າງແຕ່ລະປີມີດັ່ງລຸ່ມນີ້:

ປີ	ມູນຄ່າການກວດສອບ
2022	32,000
2023	32,000
2024	32,000
2025	ບໍ່ເກີນ 37,000

ຫຼັງປະທານກອງປະຊຸມ ໄດ້ລາຍງານວາລະນີ້ແລ້ວກໍ່ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນ ປະກອບຄຳເຫັນ ແລະ ສອບຖາມ ເຊິ່ງມີຜູ້ຖືຮຸ້ນມີຄຳເຫັນດັ່ງນີ້:

ຜູ້ຖືຮຸ້ນ: ທ່ານ ນາງ ຕຸກຕາ ແກ້ວວິຈິດ (ໄດ້ຮັບມອບສິດຈາກ ທ່ານ ໄກວັນ ກາດາວານິດ) ໄດ້ຝາກຄຳເຫັນຜ່ານທາງເລຂາ ກອງປະຊຸມ ດັ່ງລຸ່ມນີ້:

- ຫົວໜ່ວຍຕົວເລກຫຼັກພັນ ເຊິ່ງທະນາຄານການຄ້າ ສປປ ລາວ ອອກແຈ້ງການບັງຄັບໃຊ້ແບບຫຼັກການສາກົນເລີ່ມ ແຕ່ປີ 2025 ເປັນຕົ້ນມາ ແລະ ທາງບໍລິສັດກໍ່ໄດ້ເຮັດຖືກຕ້ອງໃນໜັງສືແຈ້ງເຊີນປະຊຸມໜ້າທີ 1 ຫາ ໜ້າທີ 9. ເຖິງ ຢ່າງໃດກໍ່ຕາມ, ໃນສະບັບພາສາອັງກິດ ໜ້າທີ 10 ຍັງມີບາງຕົວເລກທີ່ຕ້ອງໄດ້ປັບປຸງໃຫ້ຖືກຕ້ອງ;
- ຄຳວ່າ not above than ເຊິ່ງຜິດຫຼັກໄວຍາກອນ ຄວນປັບປຸງເຊິ່ງເປັນໄປໄດ້ 2 ຢ່າງຄື: ແບບທີ 1 not above ຫຼື ແບບທີ 2 no more than.

ທ່ານ ສິລາ ວຽງແກ້ວ, ປະທານສະພາບໍລິຫານ ອິດສະລະ: ຂອບໃຈຕໍ່ຄຳເຫັນດັ່ງກ່າວ. ສຳລັບປະເດັນດັ່ງກ່າວ ເຫັນວ່າທາງກົມບັນຊີ, ກະຊວງການເງິນ ກໍ່ໄດ້ມີການອອກແຈ້ງການມາແລ້ວ ເລື່ອງລາຍລະອຽດການນຳໃຊ້ຈຸດ ແລະ ຈ້ຳ ເຊິ່ງຄວນປະຕິບັດຕາມ ສະເໜີໃຫ້ຄະນະຮັບຜິດຊອບກວດສອບຄືນ ແລະ ປັບປຸງໃຫ້ຖືກຕ້ອງ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງວາລະນີ້.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງເອົາວາລະນີ້ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງ ໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 198.354.990 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.354.990 ສຽງ ຄິດເປັນ 100 %.

<u>ວາລະທີ 06: ພິຈາລະນາ ແລະ ຮັບຮອງ ການລາອອກຈາກຕຳແໜ່ງ ສະມາຊິກສະພາບໍລິຫານ ອິດສະລະ ປທລ ຂອງ ທ່ານ ວຽງຄອນ ສິດທິໄຊ</u>

ປະທານກອງປະຊຸມໄດ້ລາຍງານຕໍ່ກອງປະຊຸມ: ເນື່ອງຈາກ ທ່ານ ວຽງຄອນ ສິດທິໄຊ ປະທານຄະນະກຳມະການ ເສດຖະກິດ, ສະມາຊິກສະພາບໍລິຫານ ອິດສະລະ ຖືກແຕ່ງຕັ້ງໄປຮັບຜິດຊອບໜ້າທີ່ອື່ນ ເຊິ່ງບໍ່ມີຄວາມສະດວກໃນການ ດຳລົງຕຳແໜ່ງຕໍ່ໄປ. ດັ່ງນັ້ນ, ຈຶ່ງສະເໜີລາອອກຈາກຕຳແໜ່ງ ສະມາຊິກສະພາບໍລິຫານ ອິດສະລະ ປທລ.

ຫຼັງປະທານກອງປະຊຸມ ໄດ້ລາຍງານວາລະນີ້ແລ້ວກໍ່ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນ ປະກອບຄຳເຫັນ ແລະ ສອບຖາມ ເຊິ່ງມີຜູ້ຖືຮຸ້ນມີຄຳເຫັນດັ່ງນີ້:

ປະທານກອງປະຊຸມ ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງວາລະນີ້.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງເອົາວາລະນີ້ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເ ຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 198.354.990 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.354.990 ສຽງ ຄິດເປັນ 100 %.

<u>ວາລະທີ 07: ພິຈາລະນາ ແລະ ຮັບຮອງ ທ່ານ ຈາປາ ຄາສຸກໃສ ເປັນ ສະມາຊິກສະພາບໍລິຫານ ອິດສະລະ</u>

ປະທານກອງປະຊຸມໄດ້ລາຍງານຕໍ່ກອງປະຊຸມ: ເນື່ອງຈາກ ທ່ານ ປະທານຄະນະກຳມະການເສດຖະກິດ, ສະມາຊິກສະພາບໍລິຫານ ອິດສະລະ ປທລ ຄົນເກົ່າ ໄດ້ລາອອກເພື່ອໄປຮັບຜິດຊອບໜ້າທີ່ອື່ນ ແລະ ເພື່ອເຮັດໃຫ້ການຄຸ້ມຄອງບໍລິຫານຂອງ ປທລ ດຳເນີນໄປຢ່າງຕໍ່ເນື່ອງ. ດັ່ງນັ້ນ, ປທລ ຈຶ່ງສະເໜີແຕ່ງຕັ້ງທ່ານ ຈຳປາ ຄຳສຸກໃສ ເປັນ ປະທານຄະນະກຳມະການເສດຖະກິດ, ສະມາຊິກສະພາບໍລິຫານ ອິດສະລະ ປທລ ຄົນໃໝ່ ເພື່ອສືບຕໍ່ປະຕິບັດໜ້າທີ່ແທນຜູ້ເກົ່າ ໂດຍອາຍຸການດຳລົງຕຳແໜ່ງ ແມ່ນເທົ່າກັບອາຍຸການທີ່ຍັງເຫຼືອຂອງສະມາຊິກສະພາບໍລິຫານ ປທລ ປະຈຳສົກປີ 2025-2027.

ຫຼັງປະທານກອງປະຊຸມ ໄດ້ລາຍງານວາລະນີ້ແລ້ວກໍ່ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນ ປະກອບຄຳເຫັນ ແລະ ສອບຖາມ ເຊິ່ງບໍ່ມີຜູ້ຖືຮຸ້ນທ່ານໃດຖາມ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງວາລະນີ້.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງເອົາວາລະນີ້ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ 198.354.990 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.354.990 ສຽງ ຄິດເປັນ 100 %.

ປະທານກອງປະຊຸມໄດ້ແຈ້ງໃຫ້ຜູ້ຖືຮຸ້ນຊາບວ່າ ກອງປະຊຸມໄດ້ຮັບການພິຈາລະນາ ແລະ ອະນຸມັດຄົບຖ້ວນທຸກວາລະຕາມໜັງສືເຊີນແລ້ວ ແລະ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳເຫັນ ແລະ ສອບຖາມຕື່ມ, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດຖາມ.

ປະທານກອງປະຊຸມ ໄດ້ກ່າວປິດກອງປະຊຸມ ໃນເວລາ 11:05 ໂມງ.

ດ້ວຍຄວາມເຄົາລົບ ແລະ ນັບຖື,

ຮອງປະທານກອງປະຊຸມ

ບໍລິສັດ ປິໂຕຣລຽມການຄ້າ ລາວ ມະຫາຊົນ Petroleum Trading Lao Public Company

ດຳສອນ ສິດທິໄຊ

ໝາຍເຫດ: ບົດບັນທຶກກອງປະຊຸມສຳລັບຜູ້ຖືຮຸ້ນປະຈຳປີ 2024 ໃຫ້ຖືເອົາສະບັບພາສາລາວເປັນຫຼັກ.

(ຮ່າງ) ເອກະສານລາຍງານການເງິນ ປະຈຳປີ 2025

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ແລະ ບໍລິສັດໃນເຄືອ

ໃບລາຍງານຖານະການເງິນລວມກິດຈະການ
ວັນທີ 31 ທັນວາ 2025

	ບິດ ອະທິບາຍ	2025 ກີບ	2024 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	4	321,151,599,806	41,063,160,077
ໜີ້ຕ້ອງຮັບທາງການຄ້າ, ສຸດທິ	5	240,738,227,497	184,166,074,495
ເຄື່ອງໃນສາງ, ສຸດທິ	6	89,499,553,944	85,110,678,000
ເງິນກູ້ຢືມໄລຍະສັ້ນໃຫ້ພາກສ່ວນທີ່ກ່ຽວຂ້ອງ	25.5	401,318,900,925	403,062,115,650
ຊັບສິນໝຸນວຽນອື່ນໆ	7	1,533,199,419,863	1,369,953,243,156
ລວມຊັບສິນໝຸນວຽນທັງໝົດ		**2,585,907,702,035**	**2,083,355,271,378**
ຊັບສິນບໍ່ໝຸນວຽນ			
ຊັບສົມບັດຄົງທີ່ມີຕົວຕົນ, ສຸດທິ	8	753,464,614,491	614,446,182,732
ຊັບສົມບັດຄົງທີ່ບໍ່ມີຕົວຕົນ, ສຸດທິ	9	728,318,522	1,657,375,595
ຊັບສິນເພື່ອການລົງທຶນ, ສຸດທິ	10	567,718,833,529	537,179,487,215
ຊັບສິນບໍ່ໝຸນວຽນອື່ນໆ	11	371,578,697,460	331,561,554,970
ລວມຊັບສິນບໍ່ໝຸນວຽນທັງໝົດ		**1,693,490,464,002**	**1,484,844,600,512**
ລວມຊັບສິນທັງໝົດ		**4,279,398,166,037**	**3,568,199,871,890**

ທ່ານ ຄຳສອນ ສິດທິໄຊ
ຜູ້ອຳນວຍການ

ວັນທີ: 29 ພຶດສະພາ 2026

ທ່ານ ນາງ ຈັນທະດອນ ເພກສະຫວັນ
ຫົວໜ້າຝ່າຍບັນຊີ – ການເງິນ

ວັນທີ: 29 ພຶດສະພາ 2026

ບໍລິສັດ ປິໂຕຣລັງມເທຣດດິ້ງ ລາວ ມະຫາຊົນ ແລະ ບໍລິສັດໃນເຄືອ

ໃບລາຍງານຖານະການເງິນລວມກິດຈະການ
ໃນວັນທີ 31 ທັນວາ 2025

	ບິດ ອະທິບາຍ	2025 ກີບ	2024 ກີບ
ໜີ້ສິນ ແລະ ທຶນ			
ໜີ້ສິນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງທາງການຄ້າ	12	290,327,262,379	207,616,915,665
ໜີ້ຕ້ອງສົ່ງອາກອນ	13	171,346,502,098	58,198,496,283
ເງິນກູ້ຢືມໄລຍະສັ້ນ	14	261,937,758,349	179,390,548,031
ໜີ້ສິນໝຸນວຽນອື່ນໆ	15	349,203,591,260	131,444,280,636
ລວມໜີ້ສິນໝຸນວຽນທັ້ງໝົດ		**1,072,815,114,086**	**576,650,240,615**
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວ	14	2,212,230,338,791	2,083,637,697,036
ລວມໜີ້ສິນບໍ່ໝຸນວຽນທັ້ງໝົດ		**2,212,230,338,791**	**2,083,637,697,036**
ລວມໜີ້ສິນທັ້ງໝົດ		**3,285,045,452,877**	**2,660,287,937,651**
ທຶນ			
ທຶນຈົດທະບຽນທີ່ຖອກແລ້ວ	16	470,000,000,000	470,000,000,000
ສ່ວນເພີ່ມມູນຄ່າຮຸ້ນ	16	27,638,932,340	27,638,932,340
ສ່ວນເພີ່ມຈາກການຕີມູນຄ່າ		626,326,959,309	560,019,738,105
ກຳໄລສະສົມ			
ຈັດສັນ - ຄັງສະສົມຕາມລະບຽບການ	17	45,611,991,419	34,764,644,805
ຄັງສະສົມອື່ນໆ		1,977,267,979	1,977,267,979
ຂາດທຶນສະສົມລໍ້ຖ້າແບ່ງປັນ		(182,338,512,166)	(190,637,386,812)
ທຶນຄວາມເປັນເຈົ້າຂອງ ຂອງບໍລິສັດແມ່		**989,216,638,881**	**903,763,196,417**
ຜູ້ຖືຮຸ້ນສ່ວນນ້ອຍ		5,136,074,279	4,148,737,822
ລວມທຶນທັ້ງໝົດ		**994,352,713,160**	**907,911,934,239**
ລວມໜີ້ສິນ ແລະ ທຶນທັ້ງໝົດ		**4,279,398,166,037**	**3,568,199,871,890**

ທ່ານ ຄຳສອນ ສິດທິໄຊ
ຜູ້ອຳນວຍການ

ວັນທີ: 29 ພຶດສະພາ 2026

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຫົວໜ້າຝ່າຍບັນຊີ – ການເງິນ

ວັນທີ: 29 ພຶດສະພາ 2026

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າ 12 ເຖິງ 33 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນລວມກິດຈະການ.

DRAFT

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ແລະ ບໍລິສັດໃນເຄືອ

ໃບລາຍງານຜົນໄດ້ຮັບລວມກິດຈະການ
ສຳລັບທ້າຍປີສິ້ນສຸດ ວັນທີ 31 ທັນວາ 2025

	ບິດ ອະທິບາຍ	2025 ກີບ	2024 ກີບ
ລາຍຮັບ	18	3,779,992,387,385	4,810,295,618,721
ຕົ້ນທຶນຂາຍ		(3,568,139,351,583)	(4,482,659,488,767)
ກຳໄລເບື້ອງຕົ້ນ		**211,853,035,802**	**327,636,129,954**
ລາຍຮັບອື່ນໆ	19	225,054,284,557	298,578,694,051
ຂາດທຶນຈາກອັດຕາແລກປ່ຽນ	21	(2,772,550,575)	(93,712,113,099)
ລາຍຈ່າຍໃນການຂາຍ		(20,543,093,136)	(23,930,378,505)
ລາຍຈ່າຍບໍລິຫານ		(159,684,774,998)	(160,704,892,143)
ກຳໄລຈາກການດຳເນີນງານ		**253,906,901,649**	**347,867,440,258**
ລາຍຈ່າຍທາງການເງິນ	22	(224,007,731,980)	(158,254,206,249)
ກຳໄລກ່ອນຫັກອາກອນ		**29,899,169,699**	**189,613,234,009**
ອາກອນກຳໄລ	23	(3,000,000)	(12,020,832,820)
ກຳໄລສຸດທິສຳລັບປີ		**29,896,169,669**	**177,592,401,189**
ກຳໄລທີ່ເປັນສ່ວນຂອງ:			
ບໍລິສັດແມ່		28,811,207,092	176,052,728,293
ຜູ້ຖືຮຸ້ນສ່ວນນ້ອຍ		1,084,962,577	1,539,672,896
		29,896,169,669	**177,592,401,189**
ກຳໄລຕໍ່ຮຸ້ນ			
ກຳໄລພື້ນຖານຕໍ່ຮຸ້ນ	24	127	749

ທ່ານ ຄຳສອນ ສິດທິໄຊ
ຜູ້ອຳນວຍການ

ວັນທີ: 29 ພຶດສະພາ 2026

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຫົວໜ້າຝ່າຍບັນຊີ – ການເງິນ

ວັນທີ: 29 ພຶດສະພາ 2026

DRAFT

ສະມາຊິກສະພາບໍລິຫານ ອົດສະລະ ຊຸດປະຈຸບັນ 2025-2027

ຊີວະປະຫວັດຫຍໍ້ຂອງ ປະທານສະພາບໍລິຫານ ອົດສະລະ

I. ຂໍ້ມູນສ່ວນຕົວ



ຊື່ ແລະ ນາມສະກຸນ: ທ່ານ ສີລາ ວຽງແກ້ວ

ສັນຊາດ: ລາວ, ເຊື້ອຊາດ: ລາວ

ວັນເດືອນປີເກີດ: 07 ມີນາ 1954

ບ່ອນເກີດ: ເມືອງ ໄຊເສດຖາ, ແຂວງ ອັດຕະປື, ສ ປປ ລາວ

ບ່ອນເຮັດວຽກ: ບໍລິສັດ ພີທີແອວ ໂຮນດິ້ງ ຈຳກັດ

ປະຫວັດການສຶກສາ ແລະ ການຝຶກອົບຮົມ

1. ລະດັບການສຶກສາ:

√ **ປະລິນຍາໂທ:**

❖ ຫົວຂໍ້ວິຊາ: ເສດຖະກິດແຫ່ງຊາດ

- ຊື່ ແລະ ທີ່ຢູ່ຂອງມະຫາວິທະຍາໄລ: ສະຖາບັນເສດຖະກິດ, ປະເທດໂປແລນ (Akademia EkonomicznoWe Wroclawiu, Poland)

√ **ປະລິນຍາເອກ:**

- ຫົວຂໍ້ວິຊາ: ການເງິນ
- ຊື່ ແລະ ທີ່ຢູ່ຂອງໂຮງຮຽນ: ມະຫາວິທະຍາໄລຫວຸດສກີ, ປະເທດ ໂປແລນ (Lodzki University, Poland)

2. ເຂົ້າຮ່ວມການຝຶກອົບຮົມ:

ລ/ດ	ຫົວຂໍ້ການຝຶກອົບຮົມ	ຈັດຝຶກອົບຮົມໂດຍ	ໄລຍະເວລາ
1	ການຄຸ້ມຄອງງົບປະມານ ແລະ ການປະຕິບັດຮຸບ	KOICA	14-29/09/2006
2	ການວາງແຜນດ້ານການເງິນ ແລະ ນະໂຍບາຍ ການເງິນ	I M F	10-121993
3	ການຄຸ້ມຄອງມະຫາພາກ ແລະ ການເງິນ	.J V L (AUSTRALIA)	17-28/10/2005
4	ການຕິດຕາມວາງແຜນໂຄງການ ແລະ ການປະ ເມີນຜົນໂຄງການ	AIDAB (AUSTRALIA)	20/05-27/06/1991
5	ການຄຸ້ມຄອງເສດຖະກິດມະຫາພາກ	WORLD BANK & IMF (TOKYO)	11-29/01/1993
6	The economic development institute of the world Bank, economic reforme and investment planning course	WB	20/02-11/03/1989

3.ປະຫວັດການເຮັດວຽກ:

ລ/ດ	ບ່ອນເຮັດວຽກ	ຕຳແໜ່ງ ແລະ ໜ້າທີ່ຮັບຜິດຊອບ	ໄລຍະເວລາ
1	ຄະນະກຳມະການແຜນການແຫ່ງລັດ	ວິຊາການ, ການພົວພັນເສດຖະກິດກັບຕ່າງປະເທດ	1982-1988
2	ກະຊວງເສດຖະກິດແຜນການ ແລະ ການເງິນ	ວິຊາການ ອາວຸໂສ , ພົວພັນເສດຖະກິດລະດັບສາກົນ	1993-1995
3	ກະຊວງການເງິນ	ວິຊາການ ອາວຸໂສ ຮອງພະແນກ, ຄຸ້ມຄອງເງິນຕາຕ່າງປະເທດ	1989-1992
4	ກະຊວງການເງິນ	ຫົວໜ້າພະແນກບໍລິຫານ+ຮ່ວມມື, ບໍລິຫານ ແລະ ພົວພັນຮ່ວມມື	1996-1999
5	ກະຊວງການເງິນ	ຮອງຫົວໜ້າກົມນະໂຍບາຍການເງິນ, ຄົ້ນຄວ້ານະໂຍບາຍ ແລະ ລະບຽບດ້ານການເງິນ	1999-2000
6	ກະຊວງການເງິນ	ຮອງຫົວໜ້າຫ້ອງການກະຊວງ, ບໍລິຫານ ແລະ ສັງລວມ	2000-2001
7	ກະຊວງການເງິນ	ຮອງຫົວໜ້າຫ້ອງການກະຊວງ, ຫົວໜ້າໂຄງການຄົ້ນຕວ້າລະບຽບປະມູນ	2002-2008
8	ກະຊວງການເງິນ	ຫົວໜ້າຫ້ອງການກະຊວງ, ເສນາທິການໃຫ້ຫົວໜ້າກະຊວງ	2009-2011
9	ກະຊວງການເງິນ (ກົມກວດກາ)	ຫົວໜ້າກົມ, ກົມກວດກາການເງິນ	2011-2013
10	ກະຊວງການເງິນ	ລັດຖະມົນຕີຊ່ວຍວ່າການ/ຮອງລັດຖະມົນຕີ	2014-2019
11	ບໍລິສັດສິດທິ ໂລສິສຕິກ	ທີ່ປຶກສາອາວຸໂສ, ໃຫ້ຄຳປຶກສາ	2019
12	ບໍລິສັດໄຟຟ້າເທີນທິນບູນ	ກຳມະການສະພາບໍລິຫານ, ດ້ານລະບຽບການ	1998-2021
13	ບໍລິສັດ ລາວເດີນອາກາດ Lao Skyway	ຮອງປະທານສະພາບໍລິຫານ, ນະໂຍບາຍການເງິນ	2013-2019
14	ອົງການປະກັນສັງຄົມ	ຮອງປະທານສະພາບໍລິຫານ, ດ້ານການເງິນ	2014-2019
15	ບໍລິສັດ ໄປສະນີລາວ	ຮອງປະທານສະພາບໍລິຫານ, ດ້ານການເງິນ	2008-2014
16	ບໍລິສັດ ພີທີແອວ ໂຮນດິ້ງ	ຮອງປະທານດ້ານການຄ້າ ແລະ ລະບຽບການ, ດ້ານລະບຽບການກົດໝາຍການເງິນ	2020-ປະຈຸບັນ

ຊີວະປະຫວັດຫຍໍ້ຂອງ ປະທານຄະນະກຳມະການເສດຖະກິດ

ສະມາຊິກສະພາບໍລິຫານ ອິດສະລະ



I. ຂໍ້ມູນສ່ວນຕົວ

ຊື່ ແລະ ນາມສະກຸນ: ທ່ານ ຈຳປາ ຄຳສຸກໃສ

ສັນຊາດ: ລາວ, ເຊື້ອຊາດ: ລາວ

ວັນເດືອນປີເກີດ: 07/05/1961

ບ່ອນເກີດ: ໜອງໄຮທ່າ, ເມືອງ: ໂພນທອງ, ແຂວງນະຄອນຫຼວງ: ຈຳປາສັກ

II. ປະຫວັດການສຶກສາ ແລະ ການຝຶກອົບຮົມ

1. ລະດັບການສຶກສາ:

√ **ປະລິນຍາໂທ:** ຫົວຂໍ້ວິຊາ: ກົດໝາຍເສດຖະກິດ, ຈາກສະຖາບັນ : MARTHIN-LUTHER UNEVERSITAT (HALLE), ຕ່າງປະເທດ : ປະເທດເຢຍລະມັນ

√ **ຊັ້ນສູງທິດສະດີການເມືອງ:** ຫົວຂໍ້ວິຊາ: ທິດສະດີການເມືອງ ປີ : (2013-2014), ຊັ້ນ ສູງ, ຈາກໂຮງຮຽນ/ສະຖາບັນ : ການເມືອງ ການປົກຄອງແຫ່ງຊາດ

2. ເຂົ້າຮ່ວມການຝຶກອົບຮົມ:

ລ/ດ	ວິຊາຮຽນ(ຝຶກອົບຮົມ, ສຳມະນາ, ບຳລຸງ ຫຼື ກໍ່ສ້າງ)	ສະຖານທີ່ ຊື່ສະຖາບັນ/ປະເທດ	ວັນເດືອນປີ
1	ເສດຖະກິດຕະຫຼາດການຄ້າຕ່າງປະເທດ	CDG – KILL (ເຢຍລະມັນ)	09/1992 – 08/1993
2	ການຄຸ້ມຄອງໂຄງການແຫ່ງຊາດ	ຢູ່ວຽງຈັນ - ຈັດໂດຍ UNDP	26/05 - 07/06/1989
3	ສົ່ງເສີມການລົງທຶນຕ່າງປະເທດ(FDI)	ຍີ່ປຸ່ນ (ຈັດໂດຍ JICA)	18/11 - 13/12/1996
4	ພາສາອັງກິດ	ວຽງຈັນ, ໂດຍໂຄງການຮ່ວມມື ASCAN - EU	18/08 - 18/12/1998
5	ນະໂຍບາຍສົ່ງເສີມການລົງທຶນ(FDI)	ບາງກອກ,ລັດຖະບານໄທ	10 - 13/11/1993
6	ກົດໝາຍສາກົນ ແລະ ລະບຽບການຄ້າຕ່າງປະເທດ	ບາງກອກ,ລັດຖະບານໄທ	21/02 – 03/03/2000
7	ປະມວນກົດໝາຍວ່າດ້ວຍທຸລະກິດຂອງໄທ	ບາງກອກ,ກະຊວງການຄ້າ(ໄທ)	07/07/2000
8	ກົດໝາຍສາກົນ ແລະ ການທູດ, ເສດຖະກິດ ແລະ ການຄ້າລະຫວ່າງປະເທດ	ຢູ່ວຽງຈັນ, ຈັດໂດຍໂຄງການຊ່ວຍເຫຼືອດ້ານເຕັກນິກ ASEAN-EU	07/2000 – 07/2001
9	ການຄ້າ ແລະ ພັກທະນາໃນປະເທດ	ປັກກິ່ງ, ສ ປປ ຈີນ (ABDຈັດ)	25 – 30/04/2010
10	ນະໂຍບາຍຂອງລັດສຳລັບຜູ້ບໍລິຫານ	Kobe ປະເທດຍີປຸ່ນ (ABD ຈັດ)	09/03 – 10/04/2019
11	ການຄຸ້ມຄອງເສດຖະກິດມະຫາພາກ	ສິງກະໂປ (IMF ຈັດ)	21 – 25/5/2012
12	ການນຳໃຊ້ຂໍ້ມູນສະຖິຕິເຂົ້າໃນການພັດທະນາ	Seoul ເກົາຫຼີໃຕ້	2013

13	ລະບົບສະຖິຕິຂອງຢູໂລບ	Luxambourg (ຈັດໂດຍສະຖິຕິຢູໂລບ)	2014
14	ຍຸດທະສາດຜັກທະນາລະບົບສະຖິຕິແຫ່ງຊາດ	Chiba Japan ຈັດໂດຍ (Paris 21)	9 – 12/12/2014

3. ປະຫວັດການເຮັດວຽກ:

ລ/ດ	ຊື່ບ່ອນເຮັດວຽກ	ຕຳແໜ່ງ/ບ່ອນປະຈຳການ	ວັນເດືອນປີ	
1	ກົມຮ່ວມມືສາກົນ (ຄະນະກຳມະການແຜ່ນການແຫ່ງລັດ)	ວິຊາການ (ຮັບຜິດຊອບຮ່ວມມື ລາວ - ເຍຍລະມັນ)	10/05/1988	1989
2	ກົມສົ່ງເສີມການລົງທຶນຕ່າງປະເທດ(ຄະນະກຳມະການແຜ່ນການ ແລະ ການຮ່ວມມື)	ຫົວໜ້າພະແນກນິຕິກຳ	1990	2000
		ຮອງກົມ	2001	2004
3	ພະແນກແຜນການ ແລະ ການລົງທຶນ ແຂວງຈຳປາສັກ	ຮອງຫົວໜ້າພະແນກ	2005	2010
4	ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ (ການວ່າງແຜ່ນ ແລະ ການລົງທຶນ)	ຮອງຫວໜ້າສະຖາບັນ	2010	02/03/2012
5	ສູນສະຖິຕິແຫ່ງຊາດ(ກະຊວງແຜນການ ແລະ ການລົງທຶນ)	ຫົວໜ້າກົມ	02/03/2012	2016
6	ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ	ຫົວໜ້າຫ້ອງການເຂດ	2016	2021

ຊີວະປະຫວັດຫຍໍ້ຂອງ ປະທານຄະນະກຳມະການກວດກາຄວາມສ່ຽງພາຍໃນ ສະມາຊິກສະພາບໍລິຫານ ອິດສະລະ

III. ຂໍ້ມູນສ່ວນຕົວ



ຊື່ ແລະ ນາມສະກຸນ: ທ່ານ ບຸນຖຸ້ນ ວົງສຸລິ

ສັນຊາດ: ລາວ, ເຊື້ອຊາດ: ລາວ

ວັນເດືອນປີເກີດ: 08 ພຶດສະພາ 1965

ບ່ອນເກີດ: ເມືອງ ປາກເຊ, ແຂວງ ຈຳປາສັກ, ສ ປປ ລາວ

ບ່ອນເຮັດວຽກ: ປະທານສະພາບໍລິຫານ, ທະນາຄານ ພົງສະຫວັນ ຈຳກັດ

IV. ປະຫວັດການສຶກສາ ແລະ ການຝຶກອົບຮົມ

1. ລະດັບການສຶກສາ:

√ **ປະລິນຍາໂທ:**

❖ ຫົວຂໍ້ວິຊາ: ເສດຖະສາດ ໄຊເບີເນຕິກສ

- ຊື່ ແລະ ທີ່ຢູ່ຂອງມະຫາວິທະຍາໄລ: ສະຖາບັນ Kiev Polytechnic, Republic of Ukraine, USSR

√ **ປະລິນຍາໂທ:**

❖ ຫົວຂໍ້ວິຊາ: ເສດຖະສາດ ການພັດທະນາ; ສາຂາ ການບໍລິຫານນະໂຍບາຍການເງິນພາກລັດ ແລະ ນະໂຍບາຍເງິນຕາ.

- ຊື່ ແລະ ທີ່ຢູ່ຂອງໂຮງຮຽນ: ສະຖາບັນບັນດິດພັດທະນາບໍລິຫານສາດ (NIDA), ບາງກອກ, ປະເທດໄທ

2. ເຂົ້າຮ່ວມການຝຶກອົບຮົມ:

ລ/ດ	ຫົວຂໍ້ການຝຶກອົບຮົມ	ຈັດຝຶກອົບຮົມໂດຍ	ໄລຍະເວລາ
1	ການປັບປຸງການບໍລິຫານຄ່າໃຊ້ຈ່າຍສາທາລະນະ	ສະຖາບັນ ADB, ໂຕກຽວ, ປະເທດຍີ່ປຸ່ນ	ກໍລະກົດ 2000
2	ການຈັດຕັ້ງປະຕິບັດບໍລິຫານໜີ້ສິນ	JBIC, ໂຕກຽວ, ປະເທດຍີ່ປຸ່ນ	ມັງກອນ-ກຸມພາ 2004
3	ການວິເຄາະ ແລະ ນະໂຍບາຍ ທາງດ້ານ ເສດຖະສາດມະຫາພາກ	ສະຖາບັນ Joint Vienna, Austria.	ມັງກອນ-ມີນາ 2005
4	ການບໍລິຫານທາງດ້ານເສດຖະສາດມະຫາພາກ ສຳລັບ ຜູ້ບໍລິຫານອາວຸໂສ	ສະຖາບັນຝຶກອົບຮົມພາກພື້ນ-IMF, ປະເທດສິງກະໂປ	ມິຖຸນາ 2006
5	ການບໍລິຫານຕະຫຼາດພັນທະບັດ ແລະ ຕະຫຼາດຮຸ້ນ	ກະຊວງການເງິນ, ປະເທດຍີ່ປຸ່ນ	ຕຸລາ 2009
6	ການຕິດຕາມກວດກາດ້ານການເງິນ ແລະ ເສດຖະສາດພາກພື້ນ	ສະຖາບັນການທະນາຄານເກົາຫຼີ, ປະເທດເກົາຫຼີ	ພຶດສະພາ-ມິຖຸນາ 2010
7	ໂປຣແກຣມຝຶກອົບຮົມຄວາມເປັນຜູ້ນຳຂອງ ນາຍທະນາຄານ CLMVT	ຮ່ວມຈັດລະຫວ່າງ ທະນາຄານ ແຫ່ງປະເທດໄທ ແລະ ສະມາຄົມ ທະນາຄານໄທ, ບາງກອກ, ປະເທດໄທ	ພະຈິກ 2017

3. ປະຫວັດການເຮັດວຽກ:

ລ/ດ	ບ່ອນເຮັດວຽກ	ຕຳແໜ່ງ ແລະ ໜ້າທີ່ຮັບຜິດຊອບ	ໄລຍະເວລາ
1	ຫ້ອງການເລຂາ, ກະຊວງເສດຖະກິດ, ວາງ ແຜນ ແລະ ການເງິນ	ວິຊາການ Program	1990-1992
2	ກະຊວງການເງິນ, ສປປ ລາວ	ເລຂາທິການລັດຖະມົນຕີ	1993-1997
3	ກະຊວງການເງິນ, ສປປ ລາວ	ຮອງຜູ້ອຳນວຍການ ຫ້ອງການກວດກາ ການຈັດຊື້ສາທາລະນະ (PMO)	1998-1999
4	ພະແນກງົບປະມານແຫ່ງລັດ, ກະຊວງການ ເງິນ, ສປປ ລາວ	ຜູ້ອຳນວຍການຄຸ້ມຄອງໜີ້ສິນ ສາທາລະນະ	2000-2002
5	ກະຊວງການເງິນ, ສປປ ລາວ	ເລຂາທິການຫ້ອງການລັດຖະມົນຕີ, ຜູ້ອຳນວຍການ ຫ້ອງການວາງແຜນທາງ ການເງິນ	2003- ມີນາ 2007
6	ກຸ່ມທະນາຄານໂລກ (WBG), Washington D.C., USA	ທີ່ປຶກສາຜູ້ອຳນວຍການລະດັບສູງຂອງ ຫ້ອງການກຸ່ມອາຊີ	ເມສາ 2007 - ກັນຍາ 2009
7	ພະແນກນະໂຍບາຍການເງິນ, ກະຊວງການ ເງິນ, ສປປ ລາວ	ນັກເສດຖະສາດ, ຜູ້ອຳນວຍການ ພາກສ່ວນການເງິນ ແລະ ເສດຖະສາດ ມະຫາພາກ	ພະຈິກ 2009 - ພຶດສະພາ 2010
8	ທະນາຄານ ພັງສະຫວັນ ຈຳກັດ	ທີ່ປຶກສາອາວຸໂສ ຂອງຜູ້ອຳນວຍການ ໃຫຍ່	ສິງຫາ 2010 - ຕຸລາ 2011
9	ທະນາຄານ ພັງສະຫວັນ ຈຳກັດ	ການເງິນ	ພະຈິກ 2011 ພຶດສະພາ 2015
10	ທະນາຄານ ພັງສະຫວັນ ຈຳກັດ	ຜູ້ອຳນວນການໃຫຍ່	ມິຖຸນາ 2015 ທັນວາ 2019
11	ທະນາຄານ ພັງສະຫວັນ ຈຳກັດ	ປະທານສະພາບໍລິຫານ	ມັງກອນ 2019 - ປະຈຸບັນ

4. ການເຮັດບົດວິໄຈຄົ້ນຄວ້າ

ລ/ດ	ຫົວຂໍ້ບົດວິໄຈ	ຂອບເຂດການສຶກສາ & ຄົ້ນຄວ້າ	ປີທີ່ອອກບົດວິໄຈ
1	ປັດໄຈທີ່ສົ່ງຜົນກະທົບຕໍ່ຄວາມບໍ່ແນ່ນອນຂອງລາຄາ ແລະ ອັດຕາເງິນເຟີ້ໃນປະເທດລາວ	ສປປ ລາວ	2000
2	ເພີ່ມທະວີການໃຫ້ບໍລິການຄຸ້ມຄອງໜີ້ສິນສາທາລະນະ	ສປປ ລາວ	2009
3	ການປັບປຸງປະສິດທິພາບລາຍຮັບຂອງລັດຖະບານໃນ ປະເທດລາວ	ສປປ ລາວ	2010
4	ເອກະສານການວິເຄາະເສດຖະສາດມະຫາພາກ	ສປປ ລາວ	

ຊີວະປະຫວັດຫຍໍ້ຂອງ ປະທານຄະນະກຳມະການກວດສອບພາຍໃນ
ສະມາຊິກສະພາບໍລິຫານ ອິດສະລະ

I. ຂໍ້ມູນສ່ວນຕົວ



ຊື່ ແລະ ນາມສະກຸນ: ທ່ານ ສຈ ດາວອນ ຫວ່າງວິຈິດ

ອາຍຸ: 77 ປີ

ສັນຊາດ: ລາວ, ເຊື້ອຊາດ: ລາວ

ວັນເດືອນປີເກີດ: 1 ສິງຫາ 1948.

ບ່ອນເກີດ: ບ້ານ ນາເຫຼັກ, ເມືອງ ສາລະວັນ, ແຂວງ ສາລະວັນ.

ບ່ອນເຮັດວຽກ: ປຶກສາກົດໝາຍ (ສະຖາບັນຄົ້ນຄວ້າ ການພັດທະນາ ເສດຖະກິດ - ສັງຄົມ ນະຄອນຫຼວງວຽງຈັນ ແລະ ສູນກາງແນວລາວສ້າງຊາດ)

II. ປະຫວັດການສຶກສາ ແລະ ການຝຶກອົບຮົມ

1. ລະດັບການສຶກສາ:

√ **ປະລິນຍາຕີ:**

❖ ຊື່ ແລະ ທີ່ຢູ່ຂອງໂຮງຮຽນ: ສະຖາບັນກົດໝາຍ ແລະ ການປົກຄອງ ແຫ່ງຊາດລາວ

- ໄລຍະເວລາ: 1973

√ **ປະລິນຍາໂທ:**

❖ ຫົວຂໍ້ວິຊາ: ກົດໝາຍ

- ຊື່ ແລະ ທີ່ຢູ່ຂອງໂຮງຮຽນ: ມະຫາວິທະຍາໄລ ແຫ່ງລັດ ອາແຊກບາຍຊັນ, ອາດີດສະຫະພາບໂຊຫວຽດ
- ໄລຍະເວລາ: 1984

2. ເຂົ້າຮ່ວມການຝຶກອົບຮົມ:

ລ/ດ	ຫົວຂໍ້ການຝຶກອົບຮົມ	ຈັດຝຶກອົບຮົມໂດຍ	ວັນທີ ແລະ ໄລຍະເວລາ ການເຂົ້າຮ່ວມ
1	ກົດໝາຍ ແລະ ວຽກງານຕຸລາການ	ປະເທດ ຝຣັ່ງ ແລະ ປະເທດອື່ນ	

3. ປະຫວັດການເຮັດວຽກ:

ລ/ດ	ບ່ອນເຮັດວຽກ	ຕຳແໜ່ງ ແລະ ໜ້າທີ່ຮັບຜິດຊອບ	ໄລຍະເວລາ
1	ກົມກົດໝາຍ, ກະຊວງຍຸຕິທຳ	ກົດໝາຍ	1975 – 1978
2	ກົມໂຄສະນາ ແລະ ເຜີຍແຜ່ກົດໝາຍ, ກົມກົດໝາຍ, ກະຊວງຍຸຕິທຳ	ໂຄສະນາ ແລະ ເຜີຍແຜ່ກົດໝາຍ	1985 - 1990
3	ສານປະຊາຊົນ ສູງສຸດ	ຮອງປະທານ	1990- 2006
4	ສະພາແຫ່ງຊາດ	ສະມາຊິກ ສະພາແຫ່ງຊາດຊຸດທີ VI, ຮອງປະທານ ກຳມາທິການກົດໝາຍ	2006 - 2011

5	ສະພາແຫ່ງຊາດ	ເປັນສະມຊິກ ສະພາແຫ່ງຊາດ ຊຸດທີ VII, ປະທານກຳມາທິການກົດໝາຍ	2011 - 2016
6	ນະຄອນຫຼວງວຽງຈັນ ແລະ ສູນກາງແນວລາວສ້າງຊາດ	ທີ່ປຶກສາກົດໝາຍ (ສະຖາບັນຄົ້ນຄວ້າການພັດທະນາເສດຖະກິດ ສັງຄົມ	2016 -ປັດຈຸບັນ

<u>ເອກະສານຄັດຕິດ 5</u>

ໃບມອບສັນທະ

ຂຽນທີ.....
ວັນທີ.....ເດືອນ.....ປີ.....

(1) ຂ້າພະເຈົ້າ.....ສັນຊາດ..... ວັນທີ ເດືອນ ແລະ ປີເກີດ..... ບັດປະຈຳຕົວເລກທີ.....ຢູ່ເຮືອນ ເລກທີ.....ຖະໜົນ..... ບ້ານ .....ເມືອງ..... ແຂວງ.....

(2) ເປັນຜູ້ຖືຮຸ້ນຂອງ ບໍລິສັດ ປີໂຕຣເທຣດດິ້ງ ລາວ ມະຫາຊົນ ໂດຍຖືຮຸ້ນສາມັນຈຳນວນລວມທັງໝົດ.....ຮຸ້ນ ເຊິ່ງເທົ່າກັບຈຳນວນທີ່ຈະລົງຄະແນນສຽງໄດ້.

(3) ຂໍມອບໝາຍໃຫ້ (ກະລຸນາໃສ່ເຄື່ອງໝາຍ ✓ ລົງໃນຊ່ອງຜູ້ຮັບມອບສິດພຽງທ່ານໃດທ່ານໜຶ່ງ)

☐ (1) ທ່ານ/ທ່ານ ນາງ.....ອາຍຸ.....ປີບັດປະຈຳຕົວເລກທີ .....ຢູ່ເຮືອນ ເລກທີ..... ຖະໜົນ..... ບ້ານ .....ເມືອງ..... ແຂວງ..... ຫຼື

☐ (2) ທ່ານ ສີລາ ວຽງແກ້ວ ອາຍຸ 72 ປີ, ເມືອງ ໄຊເສດຖາ , ແຂວງ ອັດຕະປື ຫຼື

☐ (3) ທ່ານ ຈຳປາ ຄຳສຸກໃສ ອາຍຸ 65 ປີ, ບ້ານ ໜອງໄຮ່ທ່າ, ເມືອງ ໂພນທອງ, ແຂວງ ຈຳປາສັກ ຫຼື

☐ (4) ທ່ານ ບຸນຖັນ ວົງສຸລິ ອາຍຸ 61 ປີ, ເມືອງ ປາກເຊ , ແຂວງ ແຂວງ ຈຳປາສັກ, ສ ປປ ລາວ ຫຼື

☐ (5) ທ່ານ ສຈ ດາວອນ ຫວ່າງວິຈິດ ອາຍຸ 77 ປີ, ບ້ານ ນາເຫຼັກ, ເມືອງ ສາລະວັນ ແຂວງ ສາລະວັນ..

ຄົນໃດຄົນໜຶ່ງພຽງຄົນດຽວ ເປັນຜູ້ຕາງໜ້າຂອງຂ້າພະເຈົ້າ ເພື່ອເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງແທນຂ້າພະເຈົ້າໃນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025 ໃນວັນທີ 23 ມິຖຸນາ 2026 ເວລາ 9:00 ໂມງ, ທີ່ຫ້ອງປະຊຸມຊັ້ນ 8 ອາຄານຕະຫຼາດຫຼັກຊັບ ລາວ, ຖະໜົນ T4, ບ້ານໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ ຫຼື ມື້ໄດ້ເລື່ອນໄປໃນວັນ, ເວລາ ແລະ ສະຖານທີ່ອື່ນດ້ວຍ.

(4) ຂ້າພະເຈົ້າຂໍມອບໝາຍໃຫ້ຜູ້ຕາງໜ້າລົງຄະແນນສຽງແທນຂ້າພະເຈົ້າໃນກອງປະຊຸມ ດັ່ງນີ້:

- ☐ ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງມະຕິແທນຂ້າພະເຈົ້າໄດ້ທຸກປະການຕາມທີ່ເຫັນສົມຄວນ;
- ☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າ ແລະ ມີສິດຈະພິຈາລະນາ ແລະ ລົງມະຕິແທນຂ້າພະເຈົ້າໃນບາງວາລະ;
- ☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າ.

ວາລະທີ 01: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 02: ພິຈາລະນາ ແລະ ຮັບຮອງເອົາ ບົດລາຍງານຜົນການດຳເນີນທຸລະກິດ ປະຈຳປີ 2025 ແລະ ເອກະສານລາຍງານການເງິນທີ່ຜ່ານການກວດສອບຂອງຜູ້ກວດສອບພາຍນອກ ປະຈຳປີ 2025

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 03: ພິຈາລະນາ ແລະ ຮັບຮອງບໍ່ໃຫ້ມີການປັນຜົນ ຈາກຜົນການດຳເນີນທຸລະກິດປະຈຳປີ 2025 ອັນເນື່ອງມາຈາກບໍລິສັດ ຂາດທຶນສະສົມໃນຊຸມປີຜ່ານມາ

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 03: ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2026

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 05: ພິຈາລະນາ ແລະ ຮັບຮອງ ການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກຄື ບໍລິສັດ PriceWaterhouseCooper (Lao) Sole Co., Ltd ("PwC") ພ້ອມທັງກຳນົດຄ່າຈ້າງ ປະຈຳປີ 2026 ບໍ່ເກີນ 37,000 ໂດລາສະຫະລັດ

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 06: ພິຈາລະນາ ແລະ ຮັບຮອງ ການປັບປຸງອັດຕາເບ້ຍລ້ຽງກອງປະຊຸມສະພາບໍລິຫານຂອງ ສະມາຊິກສະພາບໍລິຫານ

☐ ເຫັນດີ ☐ ບໍ່ເຫັນດີ

(5) ການລົງຄະແນນສຽງຂອງຜູ້ຕາງໜ້າ ໃນວາລະການປະຊຸມໃດທີ່ບໍ່ເປັນໄປຕາມທີ່ລະບຸໄວ້ໃນໃບມອບສັນທະສະບັບນີ້ໃຫ້ຖືວ່າການລົງຄະແນນສຽງນັ້ນ ບໍ່ຖືກຕ້ອງ ແລະ ບໍ່ແມ່ນການລົງຄະແນນສຽງຂອງຂ້າພະເຈົ້າໃນຖານະຜູ້ຖືຮຸ້ນ;

(6) ໃນກໍລະນີທີ່ຂ້າພະເຈົ້າບໍ່ໄດ້ລະບຸຄວາມຕ້ອງການໃນການລົງຄະແນນສຽງ ໃນວາລະໃດໄວ້ ຫຼື ລະບຸບໍ່ຈະແຈ້ງໃຫ້ຖືວ່າເຫັນດີ;

(7) ການກະທຳໃດ ທີ່ຜູ້ຕາງໜ້າໄດ້ກະທຳໄປໃນກອງປະຊຸມ, ເວັ້ນແຕ່ກໍລະນີທີ່ຜູ້ຕາງໜ້າບໍ່ລົງຄະແນນສຽງຕາມທີ່ຂ້າພະເຈົ້າລະບຸໃນໃບມອບສັນທະສະບັບນີ້, ໃຫ້ຖືວ່າຂ້າພະເຈົ້າໄດ້ກະທຳດວ້ຍຕົນເອງທຸກຢ່າງ.

ລົງລາຍເຊັນ ຜູ້ຖືຮຸ້ນທີ່ມອບໝາຍ ລົງລາຍເຊັນ ຜູ້ຕາງໜ້າ

ຊື່ ແລະ ນາມສະກຸນ:..... ຊື່ ແລະ ນາມສະກຸນ:.....

<u>ໝາຍເຫດ</u>

1. ຜູ້ຖືຮຸ້ນທີ່ມອບໝາຍຈະຕ້ອງມອບໝາຍໃຫ້ຜູ້ຕາງໜ້າພຽງທ່ານດຽວເປັນຜູ້ເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງ ລວມທັງບໍ່ສາມາດແບ່ງແຍກຈຳນວນຮຸ້ນໃຫ້ຜູ້ຕາງໜ້າຫຼາຍທ່ານເພື່ອແຍກການລົງຄະແນນສຽງໄດ້; ແລະ
2. ກົດໝາຍວ່າດ້ວຍທະບຽນສານ (ສະບັບປັບປຸງ) ເລກທີ 11/ສພຊ, ລົງວັນທີ 26 ພະຈິກ 2009 ກຳນົດວ່າ ເພື່ອເປັນການຮັບປະກັນຄວາມຜູກພັນຂອງຜູ້ມອບໝາຍ ແລະ ຜູ້ຕາງໜ້າທາງດ້ານກົດໝາຍ, ດັ່ງນັ້ນ ໃບມອບສັນທະສະບັບນີ້ຈະຕ້ອງໄດ້ນຳໄປຈົດທະບຽນສານນຳສຳນັກງານທະບຽນສານ, ກະຊວງຍຸຕິທຳ ໃນນີ້ບໍລິສັດຈະບໍ່ຮັບຜິດຊອບໃດໆ ໃນກໍລະນີທີ່ໃບມອບສັນທະ ສະບັບນີ້ທີ່ຍື່ນຕໍ່ບໍລິສັດບໍ່ໄດ້ຈົດທະບຽນສານ.

ຄຳແນະນຳກ່ຽວກັບເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີເພື່ອເຂົ້າຮ່ວມປະຊຸມ
Instruction about the document and evidence to be present prior to attending the meeting

ເພື່ອຄວາມສະດວກໃນການລົງທະບຽນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2025 ຂອງ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ຈະເຂົ້າມາຮ່ວມກອງປະຊຸມ. ກະລຸນານຳໜັງສືເຊີນປະຊຸມ, ໃບເຂົ້າຮ່ວມກອງປະຊຸມທີ່ອອກໃຫ້ໂດຍຕະຫຼາດຫຼັກຊັບລາວ ແລະ ໃບມອບສັນທະ (ສຳຫຼັບຜູ້ຕາງໜ້າ) ມາພ້ອມເອກະສານ ທີ່ສາມາດນຳໃຊ້ຢັ້ງຢືນຕົນເອງຕາມແຕ່ລະກໍລະນີດັ່ງນີ້:

For convenience in the registration process to attend the Annual General Shareholder's Meeting for the year 2025 of Petroleum Trading Lao Public Company, The shareholders or the proxies who will attend the meeting are required to bring the invitation to the meeting, the Letter for attending the meeting issued by the Lao Securities Exchange and the proxy (applicable for the proxy only) together with the documents for proof of identity as indicated for each circumstance below:


1. ຜູ້ເຂົ້າຮ່ວມທີ່ເປັນບຸກຄົນ / attendees who are natural persons.
   ໃຫ້ນຳເອົາເອກະສານໃດໜຶ່ງຂອງຕົນເອງດັ່ງຕໍ່ໄປນີ້ມາສະແດງເວລາລົງທະບຽນ. Shall present one of the following documents of their own at the time of registration.
   1.1 ບັດປະຈຳຕົວ / Identification Card.
   1.2 ສຳມະໂນຄົວ / Family Book.
   1.3 ໜັງສືຜ່ານແດນ (ສຳລັບນັກລົງທຶນຕ່າງປະເທດ)/ Passport (For the foreign investors).
2. ຜູ້ເຂົ້າຮ່ວມທີ່ເປັນນິຕິບຸກຄົນ / attendees who are legal person.
   ໃຫ້ນຳເອົາເອກະສານໃດໜຶ່ງທີ່ກຳນົດໄວ້ໃນຂໍ້ 1 ຂ້າງເທິງພ້ອມກັບເອກະສານໃດໜຶ່ງດັ່ງຕໍ່ໄປນີ້ມາສະແດງເວລາລົງທະບຽນ. Shall present one of the documents as given in 1. Above plus one of the following documents at the time of registration.
   2.1 ໃບອະນຸຍາດນັກລົງທຶນ / Investment license.
   2.2 ໃບທະບຽນວິສາຫະກິດ / Certificate of Enterprise Registration (Affidavit).
   2.3 ໃບທະບຽນອາກອນສະບັບລ້າສຸດ / Most recent Tax Certificate.

ສຳລັບຜູ້ເຂົ້າຮ່ວມທີ່ບໍ່ແມ່ນຜູ້ອຳນວຍການຕ້ອງໄດ້ນຳເອົາໃບມອບສັນທະຈາກຜູ້ອຳນວຍການທີ່ມີສິດອຳນາດມາເພີ່ມຕື່ມອີກ. For attendee who is not the authorized director shall have the proxy as attached hereto signed by the authorized director.

ເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕເພື່ອເຂົ້າຮ່ວມກອງປະຊຸມຊຶ່ງເປັນພາສາຕ່າງປະເທດ ຕ້ອງແປເປັນພາສາລາວ ໂດຍມີການເຊັນຢັ້ງຢືນຄວາມຖືກຕ້ອງໃນການແປຈາກບໍລິສັດແປພາສາທີ່ໜ້າເຊື່ອຖືໄດ້ ສຳລັບພາສາຕ່າງປະເທດແມ່ນອະນຸຍາດໃຫ້ສຳລັບພາສາອັງກິດເທົ່ານັ້ນ. ບໍລິສັດ ປິໂຕຣເທຣດດິ້ງ ລາວ ມະຫາຊົນ ມີສິດປະຕິເສດເອກະສານອ້າງອີງໃດໆທີ່ບໍ່ເປັນໄປຕາມການກຳນົດນີ້.

All documents and evidence in the foreign language which are required to present prior to attending the meeting must be translated into Lao language and the translation shall be certified an acceptable translation company. The foreign language is permitted only for English. PTL has the right to reject any documents contradicting this provision.

ແຜນທີ່ສະຖານທີ່ຈັດປະຊຸມ



ສະຖານທີ່: ຫ້ອງປະຊຸມໃຫຍ່ ຊັ້ນ 8, ອາຄານຕະຫຼາດຫຼັກຊັບລາວ **(LSX)**,
ຖະໜົນ T4, ບ້ານ ໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ,
ສປປ ລາວ. ໂທລະສັບ: +856 (21) 265 394, ແຟັກ: +856 (21) 265394